ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ມັງກອນ 2025
ປີທີ 14
ສະບັບທີ 1003
ລາຍສັບປະດາ

## ທ່ານຮອງປະທານສະພາແຫ່ງຊາດ ຕ້ອນຮັບທູດອາເຊີໄບຊານ ປະຈຳ ສປປລາວ



(ສພຊ) - ຕອນບ່າຍວັນທີ 23 ມັງກອນ 2025 ທີ່ສະພາແຫ່ງຊາດ (ສພຊ) ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ຊອຟກີ ເມດີຊາດາ (Shovgi

ອ່ານຕໍ່ໜ້າ 4




## ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໂອ້ລົມຕໍ່ກອງປະຊຸມສະຫຼຸບວຽກງານປະຈຳປີ 2024 ຂອງຄະນະເລຂາທິການສະພາແຫ່ງຊາດ



(ສພຊ) - ໃນໂອກາດຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດກອງປະຊຸມສະຫຼຸບປະຈຳປີ 2024 ຮ່ວມກັບຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ແລະ ບັນດາກຳມາທິການພາຍໃນສະພາແຫ່ງຊາດ ທີ່ດຳເນີນແຕ່ວັນທີ 25-26 ມັງກອນ 2025 ນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ໃຫ້ກຽດໂອ້ລົມຕໍ່ບັນດາຜູ້ແທນກອງປະຊຸມໂດຍທ່ານໄດ້ຕີລາຄາສູງແລະ ຍ້ອງຍໍຊົມເຊີຍຕໍ່ຄະນະເລຂາທິການສະພາແຫ່ງຊາດ, ບັນດາ

ອ່ານຕໍ່ໜ້າ 12

## ຮອງປະທານ ສພຊ ພົບປະຜູ້ມີສິດເລືອກຕັ້ງທີ່ແຂວງຄຳມ່ວນ



(ສພຊ) - ວັນທີ 21-28 ມັງກອນຜ່ານມາ, ທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ພ້ອມດ້ວຍ ສສຊ ປະຈຳເຂດເລືອກຕັ້ງທີ 12 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງທ່າແຂກ ແລະ ເມືອງຍົມມະລາດ ໄດ້ລົງເຄື່ອນໄຫວຢ້ຽມຢາມ, ພົບປະຜູ້ມີສິດເລືອກຕັ້ງຢູ່ບ້ານດອນໂດນ, ບ້ານປາກເປັ່ງ ແລະ ບ້ານດົງຊອກ ເມືອງທ່າແຂກ, ບ້ານຕາດ-ມ່ວງໄຂ່ ເມືອງຍົມມະລາດ ໂດຍການຕ້ອນຮັບຈາກຄະນະ

ອ່ານຕໍ່ໜ້າ 11

## ສຳເລັດກອງປະຊຸມລັດຖະສະພາ ກ່ຽວກັບການຮ່ວມມືຂອງບັນດາປະເທດທີ່ໃຊ້ພາສາຝຣັ່ງ




ອ່ານຕໍ່ໜ້າ 9

## ທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ຢູ່ 3 ແຂວງພາກເໜືອ

(ສພຊ) - ເພື່ອປະກອບຄຳເຫັນເຂົ້າໃສ່ເນື້ອໃນຮ່າງລັດຖະທຳມະນູນສະບັບປັບປຸງ ໃຫ້ມີຄວາມຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບໂຄງການການເມືອງສະບັບທີ 3 ແລະ ລາຍງານການເມືອງຕໍ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ເຮັດໃຫ້ຮ່າງລັດຖະທຳມະນູນກາຍເປັນສະບັບສົມບູນ; ເພື່ອເຊື່ອມຊຶມ ແລະ ສ້າງຄວາມຮັບຮູ້ເຂົ້າໃຈທີ່ຖືກຕ້ອງຕໍ່ຮ່າງລັດຖະທຳມະນູນສະບັບປັບປຸງ, ສືບຕໍ່ຍົກສູງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນໃນທົ່ວສັງຄົມ ໃຫ້ດີຂຶ້ນກວ່າເກົ່າ, ຮັບປະກັນການຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍ ໃຫ້ມີປະສິດທິພາບ, ປະສິດທິຜົນ ທັງເປັນການປະກອບສ່ວນຍູ້ແຮງຂະບວນການແຂ່ງຂັນສ້າງຜົນງານຂໍ່ານັບຮັບຕ້ອນການດຳເນີນກອງປະຊຸມໃຫຍ່ສາມຂັ້ນ ແລະ ຂໍ່ານັບຮັບຕ້ອນສາມວັນປະຫວັດສາດທີ່ສຳຄັນຂອງຊາດໃນປີ 2025.



ວັນທີ 23-24 ມັງກອນນີ້ ທີ່ເມືອງ ແລະ ແຂວງຫຼວງນໍ້າທາ ໄດ້ມີກອງປະຊຸມທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນສະບັບປັບປຸງປີ 2025 ໂດຍການເປັນປະທານຂອງທ່ານ ປອ. ກອງແກ້ວ ໄຊສິງຄຳ ກຳມະການສູນກາງພັກ, ປະທານສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ), ຮອງຫົວໜ້າອະນຸກຳມະການເນື້ອໃນ; ເຂົ້າຮ່ວມມີທ່ານວຽງສະຫວັດ ສີພັນດອນ ກຳມະການສູນກາງພັກ, ເລຂາພັກແຂວງ ເຈົ້າແຂວງໆຫຼວງນໍ້າທາ, ທ່ານ ປອ. ທອງຈັນ ມະນີໄຊ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໆບໍ່ແກ້ວ ພ້ອມດ້ວຍບັນດາທ່ານການນຳຈາກອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະ

ອ່ານຕໍ່ໜ້າ 4

## ກອງປະຊຸມ ຄລສ ປະຈຳປີ 2024



(ສພຊ) - ເພື່ອສະຫຼຸບຕີລາຄາການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຕະຫຼອດໄລຍະ 1 ປີຜ່ານມາ ແລະ ກຳນົດທິດທາງແຜນການເຄື່ອນໄຫວປະຈຳປີ 2025 ພ້ອມທັງຍົກໃຫ້ເຫັນດ້ານຜົນສຳເລັດ, ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນຖອດຖອນໄດ້ ແນໃສ່ເຮັດໃຫ້ເປັນການປັບປຸງແກ້ໄຂວຽກງານຂອງຄະນະເລຂາທິການສະພາແຫ່ງຊາດ (ຄລສ) ໃຫ້ນັບມື້ດີຂຶ້ນກວ່າເກົ່າ; ເພື່ອນຳເອົາບົດຮຽນຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ (ສພຂ) ຈຳນວນໜຶ່ງ ມາແລກປ່ຽນກັນ ລວມທັງປຶກສາຫາລືແລກປ່ຽນຄຳຄິດຄຳເຫັນລະຫວ່າງ ຄລສ ກັບບັນດາກົງຈັກພາຍໃນສະພາແຫ່ງຊາດ (ສພຊ) ແລະ ຄະນະເລຂາທິການ ສພຂ ໃນການຊອກຫາວິທີການແກ້ໄຂວຽກງານຕ່າງໆ ໃນຖານະເປັນເສນາທິການໃຫ້ສພຊ ແລະ ສພຂ ໃຫ້ນັບມື້ມີຄຸນນະພາບດີໃນຕໍ່ໜ້າ ທັງເປັນການເຜີຍແຜ່

ອ່ານຕໍ່ໜ້າ 8



ໝູນໄປຕາມໂລກ (ໜ້າ 9)



ສັນຕິພາບ... (ໜ້າ 10)




ປ້ອງກັນການສໍ້ໂກງ... (ໜ້າ 12)

# ທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ



(ສພຊ)-ວັນທີ23-24 ມັງກອນ 2025 ທີ່ແຂວງຫຼວງພະບາງ ໄດ້ມີກອງປະຊຸມທາບທາມລັດຖະທຳມະນູນ ສະບັບປັບປຸງປີ 2025 ໂດຍການເປັນປະທານຂອງທ່ານ ຣສ. ພູວົງ ອຸ່ນຄຳແສນກຳມະການສູນກາງພັກ, ຫົວໜ້າສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ(ຄລຊ)ທັງເປັນຮອງຫົວໜ້າອະນຸກຳມະການເນື້ອໃນ; ມີບັນດາທ່ານປະທານສະພາປະຊາຊົນແຂວງ,ການນຳຈາກອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສະພາການຄ້າ ແລະ ອຸດສາຫະກຳ, ແລະ ພາກສ່ວນທີ່ກ່ຽວຂ້ອງຂອງ 3 ແຂວງ ຄື: ອຸດົມໄຊ, ຫຼວງພະບາງ ແລະ ໄຊຍະບູລີ ເຂົ້າຮ່ວມ 93 ທ່ານ.

ທ່ານ ຣສ. ພູວົງ ອຸ່ນຄຳແສນໄດ້ມີຄຳເຫັນວ່າ: ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອປະກອບຄຳເຫັນເຂົ້າໃສ່ເນື້ອໃນຮ່າງລັດຖະທຳມະນູນສະບັບປັບປຸງໃຫ້ມີຄວາມຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບໂຄງການການເມືອງສະບັບທີ3ແລະລາຍງານການເມືອງຕໍ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ເຮັດໃຫ້ຮ່າງລັດຖະທຳມະນູນກາຍເປັນສະບັບສົມບູນ; ເພື່ອເຊື່ອມຊຶມ ແລະ ສ້າງຄວາມຮັບຮູ້ເຂົ້າໃຈທີ່ຖືກຕ້ອງຕໍ່ຮ່າງລັດຖະທຳມະນູນສະບັບປັບປຸງ, ສືບຕໍ່ຍົກສູງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນໃນທົ່ວສັງຄົມໃຫ້ດີກວ່າເກົ່າ, ຮັບປະກັນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ໃຫ້ມີປະສິດທິພາບ, ປະສິດທິຜົນ ທັງເປັນການປະກອບສ່ວນຍູ້ແຮງຂະບວນການແຂ່ງຂັນສ້າງຜົນງານຂໍ່ານັບຮັບຕ້ອນການດຳເນີນກອງປະຊຸມໃຫຍ່ສາມຂັ້ນ ແລະ ຂໍ່ານັບຮັບຕ້ອນສາມວັນປະຫວັດສາດທີ່ສຳຄັນຂອງຊາດໃນປີ 2025.ກອງປະຊຸມຄັ້ງນີ້ມີເນື້ອໃນຄວາມໝາຍສຳຄັນຢ່າງເລິກເຊິ່ງ ເພາະວ່າຜູ້ເຂົ້າຮ່ວມຈະໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ກົດໝາຍສູງສຸດຂອງລັດ ເຊິ່ງເປັນກົດໝາຍແມ່ຂອງຊາດ ຢູ່ໃນທ່າມກາງທີ່ສະພາບການຂອງໂລກ, ພາກພື້ນ ແລະ ພາຍໃນປະເທດມີທັງຂໍ້ສະດວກ ແລະ ສິ່ງທ້າທາຍ ເຊິ່ງເລັ່ງທວງໃຫ້ພວກເຮົາ ຈະຕ້ອງໄດ້ເດັດດ່ຽວໝຽວແໜ້ນປົກປັກຮັກສາປະເທດຊາດໄວ້ໃຫ້ໝັ້ນຄົງແລະສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໄປຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມທີ່ພັກເຮົາໄດ້ກຳນົດໄວ້.

ໃນກອງປະຊຸມ, ໄດ້ຮັບຟັງບົດອະທິບາຍການປັບປຸງເນື້ອໃນຂອງຮ່າງລັດຖະທຳມະນູນຈາກທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ທັງເປັນຮອງຫົວໜ້າອະນຸກຳມະການໂຄສະນາ; ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ປະກອບຄຳເຫັນຢ່າງມີຈຸດສຸມ ແລະ ເປັນປະໂຫຍດ ເພື່ອໃຫ້ ຄລຊ ນຳຄຳເຫັນໄປຄົ້ນຄວ້າ ແລະ ປັບປຸງຮ່າງລັດຖະທຳມະນູນໃຫ້ເປັນສະບັບສົມບູນ ເພື່ອນຳສະເໜີຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະເປີດຂຶ້ນໃນທ້າຍເດືອນມີນານີ້.

**(ກົງທະນູຄຳ ພິພັດເສລີ)**

# ກອງປະຊຸມໃຫຍ່ຄັ້ງທີ II ໜ່ວຍກຳມະບານຮາກຖານ ກສຕສ



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍກຳມະບານຮາກຖານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ໄດ້ດຳເນີນໃນຕອນບ່າຍວັນສຸກທີ 17 ມັງກອນຜ່ານມາໂດຍການເປັນປະທານຂອງສະຫາຍ ນາງ ກິ່ງນະຄອນ ຈັນທະກຸມມານ ປະທານກຳມະບານຮາກຖານ ກສຕສ; ມີສະຫາຍ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ຄະນະພັກສະພາແຫ່ງຊາດ(ສພຊ), ເລຂາໜ່ວຍພັກຮາກຖານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສະຫາຍ ໂພສີ ເຕັມເມລາດ ຮອງປະທານຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ, ບັນດາສະຫາຍຕາງໜ້າຈາກໜ່ວຍກຳມະບານຮາກຖານພາຍໃນສພຊ ລວມຜູ້ເຂົ້າຮ່ວມທັງໝົດ 33 ສະຫາຍ ເປັນຍິງ 16 ສະຫາຍ.

ກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ແລະ ຮັບຮອງເອົາບົດລາຍງານການເມືອງ ເຊິ່ງໄດ້ຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ, ບາງບົດຮຽນທີ່ຖອດຖອນໄດ້ ໃນການຊີ້ນຳ-ນຳພາ ແລະ ການຈັດຕັ້ງປະຕິບັດວຽກງານໃນໄລຍະປີ2019-2024ແລະທິດທາງແຜນການ 5 ປີ ນັບແຕ່ປີ 2025-2029.

ຜູ້ແທນກອງປະຊຸມ ໄດ້ພ້ອມກັນໃຊ້ສິດປະຊາທິປະໄຕປ່ອນບັດຄັດເລືອກເອົາຄະນະໜ່ວຍກຳມະບານຮາຖານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຊຸດໃໝ່ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ແລະ ຖືກຕ້ອງສອດຄ່ອງກັບມາດຕະຖານແລະເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ອອກສະໝັກຮັບເລືອກຕັ້ງ7ສະຫາຍ, ຍິງ 3 ສະຫາຍ, ເລືອກເອົາ 5 ສະຫາຍ, ຍິງ 2 ສະຫາຍ ຄື: ສະ ຫາຍ ນາງ ກິ່ງນະຄອນ ຈັນທະກຸມມານ ເປັນປະທານ; ສະຫາຍ ສົມຈິດ ພົມຖາວົງ ເປັນຮອງປະທານ, ສະຫາຍ ບຸນທະສິນ ໄຊຍະລາດ ເປັນປະທານກວດກາ, ສະຫາຍ ນາງ ແມ້ວ ບຸນຍະສານ ແລະ ສະຫາຍ ວອນໄຊ ພອນວິໄລ ເປັນຄະນະ.

ສະຫາຍ ນາງ ປິ່ງຄຳ ລາຊະສິມມາ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານການເຄື່ອນໄຫວ ແລະ ສ້າງຂະບວນການຕ່າງໆ ທີ່ບັນດາສະຫາຍສະມາຊິກກຳມະບານ ໄດ້ຕັ້ງໜ້າປະກອບສ່ວນຈັດຕັ້ງປະຕິບັດຢ່າງຫ້າວຫັນ ຕິດພັນກັບການພັດທະນາວຽກງານວິຊາສະເພາະຂອງກຳມາທິການໃນໄລຍະຜ່ານມາ ໂດຍສະເພາະການເປັນເສນາທິການຄົ້ນຄວ້າໃນ 3 ພາລະບົດບາດ ໃຫ້ແກ່ຄະນະປະຈຳສະພາແຫ່ງຊາດແລະສະພາແຫ່ງຊາດ ເປັນຕົ້ນ: ການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ການພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ການຕິດຕາມກວດກາໃນຂົງເຂດເສດຖະກິດ ໄປຄຽງຄູ່ກັບການປະຕິບັດຂໍ້ແຂ່ງຂັນເນື້ອໃນ 5 ເປັນເຈົ້າ, ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ການກໍ່ສ້າງໜ່ວຍພັກໃຫ້ປອດໃສ ເຂັ້ມແຂງ ແລະ ໜັກແໜ້ນ; ພ້ອມກັນນີ້, ສະຫາຍຍັງໄດ້ເນັ້ນໜັກ ແລະ ໃຫ້ທິດຊີ້ນຳຕໍ່ຄະນະ ແລະ ສະມາຊິກກຳມະບານພາຍໃນຮາກຖານຕ້ອງເອົາໃຈໃສ່ບຸກບືນ ແລະ ຈັດຕັ້ງປະຕິບັດໜ້າທີ່ການເມືອງໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**(ນາງ ກຸກກິກ ບຸດດາໄຊ)**

# ຄະນະຜູ້ແທນ ສພຊ ລາວ ສຳເລັດການເຂົ້າຮ່ວມ ກອງປະຊຸມຄະນະບໍລິຫານງານ APF ທີ່ເກິນເທີ




(ສພຊ) - ລະຫວ່າງວັນທີ 20-25 ມັງກອນ 2025 ຄະນະຜູ້ແທນສະພາແຫ່ງຊາດ(ສພຊ) ແຫ່ງ ສປປລາວ ນຳໂດຍທ່ານ ສັນຍາ ປຣະເສີດ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມຄະນະບໍລິຫານງານສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (APF) ທີ່ນະຄອນເກິນເທີ, ສສ.ຫວຽດນາມ; ເຂົ້າຮ່ວມມີຄະນະຜູ້ແທນຈາກປະເທດທີ່ໃຊ້ພາສາຝຣັ່ງ 26 ປະເທດ ພ້ອມດ້ວຍຕົວແທນຈາກອົງການຝຣັ່ງໂກໂຟນີສາກົນ (OIF) ແລະ ຄະນະເລຂາທິການໃຫຍ່ສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ, ສະມາຊິກສະພາແຫ່ງຊາດຫວຽດນາມ ປະເທດເຈົ້າພາບ ລວມທັງໝົດ 70 ທ່ານ.

ກອງປະຊຸມໄດ້ພິຈາລະນາຮັບຮອງເອົາໂຄງປະກອບຄະນະບໍລິຫານງານຊຸດໃໝ່ຂອງສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງນັບແຕ່ເດືອນມັງກອນ 2025, ຮັບຮອງເອົາສະມາຄົມລັດຖະສະພາຂອງລັດສະມາຊິກຄະນະກຳມາທິການມະຫາສະໝຸດອິນເດຍ(APCOI)ເຂົ້າເປັນຜູ້ສັງເກດການຂອງ APF, ຮ່າງນິຕິກຳກ່ຽວກັບການຈັດສັນງົບປະມານທີ່ໃຫ້ຄວາມສຳຄັນຕໍ່ບົດບາດຍິງ-ຊາຍ, ໂຄງການການຮ່ວມມືລະຫວ່າງລັດຖະສະພາ ປະຈຳປີ2025, ແຜນປະຕິບັດງານໃນຂອບຍຸດທະສາດ 2023-2030, ແຜນການເຄື່ອນໄຫວຂອງກອງປະຊຸມຕ່າງໆໃນຂອບ ແລະ ກົນໄກຂອງ APF; ປຶກສາຫາລືກ່ຽວກັບບົດບາດທາງການເມືອງຂອງ APF ຕໍ່ລະບຽບໂລກທີ່ປະເຊີນໜ້າກັບຄວາມສະຫຼັບຊັບຊ້ອນ ໂດຍສະເພາະແມ່ນການເພີ່ມທະວີການຮ່ວມມືລະຫວ່າງ APF ແລະ OIF. ພ້ອມກັນນີ້, ຍັງໄດ້ຮັບຟັງບົດລາຍງານກ່ຽວກັບແຜນງົບປະມານປະຈຳປີ 2025 ຂອງ APF, ການສະຫຼຸບການເຄື່ອນໄຫວວຽກງານຂອງບັນດາກຳມາທິການປະຈຳ, ເຄືອຂ່າຍສະມາຊິກລັດຖະສະພາເພດຍິງ, ສະມາຊິກລັດຖະສະພາໜຸ່ມ ແລະ ຄະນະລັດຖະສະພາປະຈຳພາກພື້ນຕ່າງໆຂອງ APF; ຄົ້ນຄວ້າການປະດັບຫຼຽນໃຫ້ບຸກຄົນທີ່ມີຜົນງານດີເດັ່ນທີ່ປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານຂອງອົງການ APF ໃນປີ 2024-2025.

ໂອກາດນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ເຂົ້າຮ່ວມກອງປະຊຸມລະຫວ່າງຄະນະຜູ້ແທນຈາກບັນດາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງໃນພາກພື້ນອາຊີ-ປາຊີຟິກ ເພື່ອປຶກສາຫາລືກ່ຽວກັບທິດທາງ, ການຮ່ວມມືແລະການຈັດກອງປະຊຸມລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງປະຈຳພາກພື້ນອາຊີ-ປາຊີຟິກ ໃນ 2025.

ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ແລກປ່ຽນຄຳຄິດຄຳເຫັນຕາມວາລະຂອງກອງປະຊຸມ ໂດຍຍົກໃຫ້ເຫັນສະພາບການທາງດ້ານການເມືອງໃນພາກພື້ນ ແລະ ໃນໂລກ, ການພັດທະນາເສດຖະ ກິດ-ສັງຄົມຂອງ ສປປລາວ ແລະ ການດຳເນີນນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືອັນສະເໝີຕົ້ນສະເໝີປາຍ, ຊຸກຍູ້ໃຫ້ມີການຜົວພັນຮ່ວມມືເຊິ່ງກັນແລະກັນທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍລະຫວ່າງປະເທດສະມາຊິກຝຣັ່ງໂກໂຟນ ໃຫ້ຫຼາຍຂຶ້ນ ເພື່ອນຳເອົາຜົນປະໂຫຍດມາສູ່ປະຊາຊົນຂອງແຕ່ລະປະເທດ; ພ້ອມກັນນີ້, ຍັງໄດ້ຮັບເອົາການສະເໜີໃຫ້ສະພາແຫ່ງຊາດລາວເປັນເຈົ້າພາບຈັດກອງປະຊຸມກຳມາທິການວຽກງານສະມາຊິກລັດຖະສະພາ APF ເຊິ່ງຄາດວ່າຈະຈັດຂຶ້ນລະຫວ່າງວັນທີ 12-14 ມີນານີ້ ທີ່ນະຄອນຫຼວງວຽງຈັນ.

## ທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ຢູ່ 3 ແຂວງພາກໃຕ້



(ສພຊ)-ວັນທີ21-22 ມັງກອນນີ້, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ) ໄດ້ຈັດກອງປະຊຸມທາບທາມຮ່າງລັດຖະທຳມະນູນ ສະບັບປັບປຸງປີ 2025 ສຳລັບ 3 ແຂວງຄື: ສາລະວັນ, ເຊກອງ ແລະ ອັດຕະປື ເຊິ່ງຈັດຂຶ້ນທີ່ແຂວງເຊກອງ ໂດຍການເປັນປະທານຂອງທ່ານ ຄຳໄຫຼ ສີປະເສີດ ກຳມະການສູນກາງພັກ, ຮອງປະທານ ຜູ້ປະຈຳການສູນກາງແນວລາວສ້າງຊາດ, ກຳມະການໃນ ຄລຊ ທັງເປັນຮອງຫົວໜ້າອະນຸກຳມະການໂຄສະນາ; ມີທ່ານ ເຫຼັກໄຫຼ ສີວິໄລ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງເຊກອງ, ບັນດາທ່ານການນຳຈາກສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ບັນດາພະແນກການ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສະພາການຄ້າ ແລະ ອຸດສາຫະກຳ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງຂອງ3ແຂວງດັ່ງກ່າວເຂົ້າຮ່ວມ 90 ກວ່າທ່ານ.

ຈຸດປະສົງເພື່ອເຮັດໃຫ້ຮ່າງລັດຖະທຳມະນູນສະບັບປັບປຸງປີ 2025 ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບໂຄງການການເມືອງຂອງພັກສະບັບທີ 3 ແລະ ລາຍງານການເມືອງຕໍ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ, ເພື່ອເຊື່ອມຊຶມ ແລະ ສ້າງຄວາມຮັບຮູ້ເຂົ້າໃຈທີ່ຖືກຕ້ອງກ່ຽວກັບຮ່າງລັດຖະທຳມະນູນສະບັບປັບປຸງ, ສືບຕໍ່ຍົກສູງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນໃນທົ່ວສັງຄົມ ໃຫ້ດີຂຶ້ນກວ່າເກົ່າ; ທັງເປັນການປະກອບສ່ວນຍູ້ແຮງຂະບວນການແຂ່ງຂັນສ້າງຜົນງານຂໍ່ານັບຮັບຕ້ອນການດຳເນີນກອງປະຊຸມໃຫຍ່ສາມຂັ້ນ ແລະ ຂໍ່ານັບຮັບຕ້ອນສາມວັນປະຫວັດສາດທີ່ສຳຄັນຂອງຊາດ ໃນປີ 2025.

ໃນກອງປະຊຸມ, ໄດ້ຮັບຟັງບົດອະທິບາຍການປັບປຸງເນື້ອໃນຂອງຮ່າງລັດຖະທຳມະນູນຈາກທ່ານ ສຸບັນ ສະອະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ; ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ປະກອບຄຳເຫັນຢ່າງມີຈຸດສຸມ ແລະ ເປັນປະໂຫຍດ ເພື່ອໃຫ້ຄລຊນຳຄຳເຫັນໄປຄົ້ນຄວ້າ ແລະ ປັບປຸງຮ່າງລັດຖະທຳມະນູນໃຫ້ເປັນສະບັບສົມບູນ ເພື່ອນຳສະເໜີຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະເປີດຂຶ້ນໃນທ້າຍເດືອນມີນານີ້.

**(ນາງ ກຸກກິກ ບຸດດາໄຊ)**



## ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານ ຄລສ



(ສພຊ)-ວັນທີ27-28 ມັງກອນນີ້ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນໄດ້ມີກອງປະຊຸມສຳມະນາສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານຄະນະເລຂາທິການສະພາແຫ່ງຊາດ (ຄລສ) ໂດຍການເປັນປະທານຂອງທ່ານນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດແລະທ່ານ ສົງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງມີບັນດາທ່ານຮອງປະທານກຳມາທິການ, ຮອງເລຂາທິການ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສພຊ); ເລຂາທິການ-ຮອງເລຂາທິການສະພາປະຊາຊົນແຂວງ-ນະຄອນຫຼວງ ພ້ອມດ້ວຍຄະນະກົມ, ສູນ ແລະ ຫ້ອງການ; ຄະນະພະແນກ ແລະ ລັດຖະກອນຈາກ ສພຊ ເຂົ້າຮ່ວມ 120 ກວ່າທ່ານ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການການເຜີຍແຜ່ຂໍ້ຕົກລົງເພີ່ມຕື່ມວ່າດ້ວຍການປັບປຸງບາງມາດຕາຂອງຂໍ້ຕົກລົງວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານຂອງລັດ, ການປະຢັດ ແລະ ຕ້ານການຟຸ່ມເຟືອຍ ສະບັບເລກທີ 0012/ກງ, ລົງວັນທີ 03 ມັງ ກອນ 2025 ແລະ ຄຳແນະນຳວ່າດ້ວຍການປັບປຸງເງິນອຸດໜູນ ແລະ ເງິນນະໂຍບາຍຕ່າງໆ ສະບັບເລກທີ 4524/ກງ, ລົງວັນທີ13ທັນວາ 2024 ສະເໜີໂດຍທ່ານ ເອກກະໄຊ ພູທອນສີ ຮອງຫົວໜ້າກົມງົບປະມານ, ກະຊວງການເງິນ; ສະພາບລວມການຂຶ້ນແຜນກິດຈະກຳຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ທີ່ຈະນຳສະເໜີຜູ້ໃຫ້ທຶນພິຈາລະນາໃນປີ 2025, ລະບຽບການເງິນຂອງໂຄງການສະໜັບສະໜູນ ສພຊ ແລະ ສພຂ, ການຂຽນແຜນກິດຈະກຳ ແລະ ບົດລາຍງານຜົນສຳເລັດທີ່ນຳໃຊ້ງົບປະມານໂຄງການສະເໜີໂດຍພະນັກງານໂຄງການຊ່ວຍເຫຼືອສະພາແຫ່ງຊາດ; ນິຕິກຳກ່ຽວກັບການຂຽນ-ການກຳນົດຕຳແໜ່ງງານໃນຂົງເຂດຂອງ ສພຊ ແລະ ສພຂ ສະເໜີໂດຍທ່ານ ພອນປະເສີດ ກຸລະວົງ ຮອງຫົວໜ້າກົມພັດທະນາການບໍລິຫານລັດ, ກະຊວງພາຍໃນ; ນິຕິກຳກ່ຽວກັບການສ້າງແຜນການລົງທຶນຂອງລັດໃນຂົງເຂດຂອງ ສພຊ ແລະ ສພຂ ສະເໜີໂດຍທ່ານ ປອ. ຈັນຕະນາພອນ ວົງໄຊຮອງຫົວໜ້າກົມແຜນການ, ກະຊວງແຜນການແລະການລົງທຶນ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກໍໄດ້ແລກປ່ຽນບົດຮຽນ ແລະປະກອບຄຳເຫັນໃສ່ບັນດາເນື້ອໃນທີ່ນຳສະເໜີ ແລະ ປຶກສາຫາລື ເພື່ອຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ສາເຫດ ແລະ ສະເໜີວິທີການແກ້ໄຂຢ່າງກົງໄປກົງມາ ເຊິ່ງຈະເປັນຂໍ້ມູນນຳໄປປັບປຸງໃນຕໍ່ໜ້າ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິເອເຊຍ (The Asia Foundation - TAF) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ຂ່າວ: ນາງ ສຸພາວັນ ທອມສະນິດ; ພາບ: ສອນສັກ ວັນວິໄຊ)**

## ມອບ-ຮັບ ຄອມພິວເຕີ 2 ໜ່ວຍ



(ສພຊ)-ຕອນບ່າຍວັນຈັນທີ 20 ມັງກອນຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບຄອມພິວເຕີຕັ້ງໂຕະ 2 ໜ່ວຍ ລວມມູນຄ່າ 24 ລ້ານກີບ ຈາກບໍລິສັດ ເຈບີ ເທຣດດິງ (JB Trading) ຈຳກັດ, ຕາງໜ້າກ່າວມອບໂດຍທ່ານ ຊາຄຣິດ ນັກສອນ ປະທານບໍລິສັດດັ່ງກ່າວ ແລະ ຕາງໜ້າກ່າວຮັບໂດຍທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ທ່ານ ປອ. ອາຄົມ ປຣະເສີດ ໄດ້ກ່າວສະແດງຄວາມຂອບໃຈ ແລະ ມອບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດ ເພື່ອຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳຄັ້ງນີ້.

**(ນາງ ອາລິນ ສຸພົມມະປະດິດ)**

## ອົງການຈັດຕັ້ງມະຫາຊົນ ອວຍພອນວັນສ້າງຕັ້ງກອງທັບ



(ສພຊ) - ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 76 ປີ (20/01/1949-20/01/2025), ຕອນບ່າຍວັນອັງຄານທີ 21 ມັງກອນຜ່ານມາທີ່ສະພາແຫ່ງຊາດ (ສພຊ), ອົງການຈັດຕັ້ງມະຫາຊົນຂອງສະພາແຫ່ງຊາດນຳໂດຍສະຫາຍ ນາງ ມະນີວັນ ເຍຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ປະທານສະຫະພັນແມ່ຍິງ ແລະ ສະຫາຍ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍ, ປະທານສະຫະພັນກຳມະບານ ໄດ້ເຂົ້າອວຍພອນສະຫາຍ ພົຕ. ປອ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ແລະ ພະນັກງານພາຍໃນກຳມາທິການ ປກຊ-ປກສ; ທັງນີ້, ກໍເພື່ອສະແດງຄວາມຮູ້ບຸນຄຸນຕໍ່ກຳລັງປ້ອງກັນຊາດ ກໍຄືນາຍ ແລະ ພົນທະຫານ ທີ່ໄດ້ເສຍສະຫຼະເລືອດເນື້ອເພື່ອຊາດເພື່ອປະຊາຊົນ ທີ່ຍາມໃດກໍເສຍສະຫຼະຄວາມສຸກສ່ວນຕົວເພື່ອຄວາມສຸກ ສະບາຍຂອງພີ່ນ້ອງປະຊາຊົນລາວບັນດາເຜົ່າທັງເປັນການສ້າງຂວັນ ແລະ ກຳລັງໃຈໃຫ້ແກ່ກຳລັງ ປກຊ-ປກສ ທົ່ວ ສພຊ.

ໂອກາດດັ່ງກ່າວ, ສະຫາຍປະທານກຳມາທິການປກຊ-ປກສ ໄດ້ເລົ່າປະຫວັດວັນສ້າງຕັ້ງກອງທັບໂດຍຫຍໍ້ ແລະ ກ່າວສະແດງຄວາມຂອບໃຈຕໍ່ຄະນະອົງການຈັດຕັ້ງມະຫາຊົນສະພາແຫ່ງຊາດທີ່ໄດ້ອວຍພອນເນື່ອງໃນວັນສຳຄັນດັ່ງກ່າວ; ພ້ອມນັ້ນ, ສະຫາຍຍັງໄດ້ອວຍພອນໄຊແກ່ການນຳກໍຄືພະນັກງານ-ລັດຖະກອນທົ່ວ ສພຊ ຈົ່ງປະສົບຜົນສຳເລັດໃນໜ້າທີ່ວຽກງານ.

**(ສອນສັກ ວັນວິໄຊ)**

# ເຝິກອົບຮົມວຽກງານລັດຖະສະພາທີ່ປະເທດໄທ



(ສພຊ)-ວັນທີ 13-17 ມັງກອນ 2025 ທ່ານ ສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ພ້ອມດ້ວຍພະນັກງານຈາກສູນຄົ້ນຄວ້ານິຕິກຳ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງໝົດ 17 ທ່ານ ໄດ້ເຂົ້າຮ່ວມເຝິກອົບຮົມທີ່ສະຖາບັນພຣະປົກເກລົ້າ ແຫ່ງລາຊະອານາຈັກໄທ ໂດຍການໃຫ້ກຽດກ່າວຕ້ອນຮັບແລະມີຄຳເຫັນໂອ້ລົມຂອງທ່ານ ວັນມູຫະມັດນໍຣ໌ ມະທາ ປະທານລັດຖະສະພາ ແຫ່ງລາຊະອານາຈັກໄທ.

ຈຸດປະສົງຕົ້ນຕໍຂອງການເຝິກອົບຮົມຄັ້ງນີ້ ແມ່ນເພື່ອສົ່ງເສີມຄວາມຮູ້ກ່ຽວກັບການບໍລິຫານງານລັດຖະສະພາ ເພື່ອພັດທະນາສັກກະຍະພາບຂອງບຸກຄະລາກອນທີ່ສະໜັບສະໜູນວຽກງານລັດຖະສະພາ ໃຫ້ມີຄວາມຮູ້ໃນການກະກຽມເອກະສານການຄົ້ນຄວ້າກ່ຽວກັບລັດຖະສະພາ, ຂະບວນການວິເຄາະຮ່າງກົດໝາຍ, ຂະບວນກະກຽມງົບປະມານລາຍຈ່າຍປະຈຳປີ/ການວິເຄາະງົບປະມານ ລວມທັງບົດຮຽນ ແລະ ແບບຢ່າງທີ່ດີດ້ານການເມືອງການປົກຄອງໃນກໍລະນີສຶກສາຂອງປະເທດໄທ; ເພື່ອເປັນການສົ່ງເສີມການຮ່ວມມືດ້ານວິຊາການກັບອົງການເຄືອຂ່າຍທັງພາຍໃນ ແລະ ຕ່າງປະເທດໃນການພັດທະນາການຄົ້ນຄວ້າກ່ຽວກັບລັດຖະສະພາ ແລະ ຍົກລະດັບການໃຫ້ບໍລິການແກ່ສະມາຊິກລັດຖະສະພາຂອງທັງສອງປະເທດ.

ໃນການເຝິກອົບຮົມໄດ້ຮັບຟັງການບັນລະຍາຍໃຫ້ຄວາມຮູ້ກ່ຽວກັບບົດບາດ ແລະ ໜ້າທີ່ການບໍລິຫານງານແລະການພັດທະນາສັກກະຍະພາບບຸກຄະລາກອນຂອງສະຖາບັນພຣະປົກເກລົ້າ; ການສະໜັບສະໜູນດ້ານວິຊາ ການໃຫ້ແກ່ສະມາຊິກລັດຖະສະພາ ແລະ ຄະນະກຳມາທິການ ໂດຍສະຖາບັນພຣະປົກເກລົ້າ; ການສ້າງເຄືອຂ່າຍ ແລະ ການຮ່ວມມືເພື່ອຄວາມເປັນເລີດຂອງລັດຖະສະພາ; ປະຊາທິປະໄຕໃນປະ ເທດໄທ: ສິ່ງທ້າທາຍ ແລະ ເສັ້ນທາງສູ່ລະບອບປະຊາທິປະໄຕ; ຂະບວນການດ້ານນິຕິບັນຍັດແລະການວິເຄາະຮ່າງກົດໝາຍ; ການຄົ້ນຄວ້າວິໄຈສຳລັບສະມາຊິກລັດຖະສະພາແລະຄະນະກຳມາທິການ; ກອງປະຊຸມລັກສະນະການຈັດຕັ້ງປະຕິບັດກ່ຽວກັບການຄົ້ນຄວ້າລັດຖະສະພາ; ສະພານິຕິບັນຍັດ ແລະ ການຂຶ້ນແຜນງົບປະມານ, ເຄື່ອງມື ແລະ ກົນໄກການຕິດຕາມກວດກາຂອງລັດຖະສະພາ: ສຳນັກງານງົບປະມານລັດຖະສະພາ(PBO); ການປຶກສາຫາລືສາທາລະນະ ແລະ ການປະເມີນຜົນກະທົບຕໍ່ລະບຽບການ. ພ້ອມນັ້ນ, ຍັງໄດ້ທັດສະນະສຶກສາລັດຖະສະພາໄທ ແລະ ພິພິທະ ພັນສະຖາບັນພຣະປົກເກລົ້າອີກດ້ວຍ.

ການເຂົ້າຮ່ວມເຝິກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນທຶນຈາກມູນນິທິເອເຊຍ (TheAsiaFoundation) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.



## ທ່ານຮອງປະທານ ...

(ຕໍ່ຈາກໜ້າ 1)

Mehdizada) ເອກອັກຄະລັດຖະທູດ ແຫ່ງ ສາທາລະນະລັດອາແຊກໄບຊານ ປະຈຳ ສປປ ລາວ ເຊິ່ງມີສຳນັກງານສະຖານທູດຢູ່ນະຄອນຫຼວງຮ່າໂນ້ຍ,ສສ. ຫວຽດນາມ.

ໃນການພົບປະ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຍິນດີຕ້ອນຮັບທ່ານ ຊອຟກີ ເມດິຊາດາ ໃນໂອກາດທີ່ມາຢ້ຽມຢາມ ແລະ ເຮັດວຽກທີ່ ສປປລາວ, ໄດ້ຕີລາຄາການພົວພັນຮ່ວມມືລະຫວ່າງ 2 ຝ່າຍ ເຊິ່ງປີ 2025 ນີ້ ເປັນປີຄົບຮອບ 30 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດນຳກັນໃນວັນທີ 22 ພຶດສະພາ 1995. ຕະຫຼອດໄລຍະ 30 ປີຜ່ານມາ, ສອງປະເທດໄດ້ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືນຳກັນໃນຂົງເຂດຕ່າງໆ ເຊັ່ນ: ການຮ່ວມມືດ້ານການເມືອງ, ດ້ານເສດຖະກິດ, ການຕ່າງປະເທດ ແລະ ດ້ານອື່ນໆ; ພິເສດ, 2 ຝ່າຍໄດ້ເຊັນສັນຍາຍົກເວັ້ນວິຊາສະເພາະຜູ້ຖືໜັງສືຜ່ານແດນທາງການທູດ ໃນປີ 2017 ແລະ ເຊັນບົດບັນທຶກການປຶກສາຫາລືລະຫວ່າງສອງກະຊວງການຕ່າງປະເທດ ລາວ-ອາແຊກໄບຊານ ໃນປີດຽວກັນ. ທ່ານຮອງປະທານສະພາແຫ່ງຊາດ ສະແດງຄວາມເຊື່ອໝັ້ນວ່າ ໃນການປະຕິບັດໜ້າທີ່ການທູດຂອງທ່ານ ຊອຟກີ ເມດິຊາດາ ຈະສືບຕໍ່ເປັນໃຈກາງແລະຂົວຕໍ່ໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການພົວພັນຮ່ວມມືລະຫວ່າງສອງປະເທດ; ຊຸກຍູ້ການພົວພັນຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ ແລະ ອື່ນໆ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນໃນຕໍ່ໜ້າ.

ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດອາແຊກໄບຊານ ໄດ້ມີການພົວພັນ ແລະ ຮ່ວມມືທີ່ດີນຳກັນ ເຊິ່ງໄດ້ມີການແລກປ່ຽນຂໍ້ມູນຂ່າວສານ, ສົ່ງສານອວຍພອນ, ສານຊົມເຊີຍ ໃນໂອກາດວັນສຳຄັນຕ່າງໆ ແລະ ມີການພົບປະກັນໃນໂອກາດເຂົ້າຮ່ວມກອງປະຊຸມລັດຖະສະພາລະດັບພາກພື້ນ ແລະ ສາກົນ ເປັນຕົ້ນ IPU, APA, AIPA ແລະ ອົງການອື່ນໆ. ນອກຈາກນີ້, ປີທີ່ຜ່ານມາ, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານປະທານກຳມາທິການການຕ່າງປະເທດ ກໍໄດ້ເຂົ້າຮ່ວມສັງເກດການການເລືອກຕັ້ງປະທານາທິບໍດີອາແຊກໄບຊານ ແລະ ປັດຈຸບັນ, ສະພາແຫ່ງຊາດລາວ ກຳລັງຄົ້ນຄວ້າປະກອບຄະນະຜູ້ແທນເຂົ້າຮ່ວມກອງປະຊຸມສະມັດຊາລັດຖະສະພາອາຊີ (APA) ເຊິ່ງຈະຈັດຂຶ້ນທີ່ນະຄອນຫຼວງບາກູ, ປະເທດອາແຊກໄບຊານ ໃນເດືອນກຸມພາ 2005.

ທ່ານ ຊອຟກີ ເມດິຊາດາ ໄດ້ສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາແຫ່ງຊາດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ, ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີລະຫວ່າງ ສ.ອາແຊກໄບຊານ-ສປປ ລາວ ເວົ້າລວມ, ເວົ້າສະເພາະລະຫວ່າງອົງການນິຕິບັນຍັດຂອງສອງປະເທດ ພ້ອມທັງແຈ້ງໃຫ້ຊາບໂດຍຫຍໍ້ການປະຕິບັດໜ້າທີ່ການທູດຢູ່ ສປປລາວ ແລະ ໃຫ້ການຢືນຢັນຈະສືບຕໍ່ຊຸກຍູ້ ແລະເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດໃຫ້ນັບມື້ນັບຂະຫຍາຍຕົວຍິ່ງໆຂຶ້ນ.

# ເຍົາວະຊົນທັນວາ ແຂວງຫຼວງພະບາງ ທັດສະນະສຶກສາຢູ່ສະພາແຫ່ງຊາດ



(ສພຊ) - ເພື່ອປູກຈິດສຳນຶກໃຫ້ເຍົາວະຊົນທັນວາໄດ້ຮູ້ເຖິງມູນເຊື້ອ, ປະຫວັດ ແລະ ຜົນງານການເຄື່ອນໄຫວຂອງທ່ານຜູ້ນຳທີ່ແສນເຄົາລົບຮັກ, ຮຽນຮູ້ແບບຢ່າງທີ່ດີເພື່ອກາຍເປັນຜູ້ສືບທອດຂອງພັກຂອງຊາດໃນອະນາຄົດ ທັງເປັນການສ້າງໃຫ້ນັກຮຽນໄດ້ຮັບຮູ້ ແລະ ມີຄວາມເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ; ຕອນບ່າຍວັນສຸກທີ 24 ມັງກອນ 2025 ຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ນຳພາເຍົາວະຊົນທັນວາແຂວງຫຼວງພະບາງ ຈຳນວນ 33 ນ້ອງທີ່ມາທັດສະນະສຶກສາແລະແລກປ່ຽນບົດຮຽນວຽກງານເຍົາວະຊົນຢູ່ນະຄອນຫຼວງວຽງຈັນມາທ່ຽວຊົມແລະທັດສະນະສຶກສາຢູ່ສະພາແຫ່ງຊາດ ໂດຍກົມສື່ມວນຊົນ ຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໃຫ້ການຕ້ອນຮັບແລະນຳພາຄະນະຢ້ຽມຊົມຫ້ອງປະຊຸມໃຫຍ່ແລະຫ້ອງມູນເຊື້ອສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

## ທາບທາມ...

(ຕໍ່ຈາກໜ້າ 1)

ທາຊົນ, ສະພາການຄ້າ ແລະ ອຸດສາຫະກຳ, ແລະ ພາກສ່ວນທີ່ກ່ຽວຂ້ອງຂອງ 3 ແຂວງ ຄື: ຜົ້ງສາລີ, ຫຼວງນ້ຳທາ ແລະ ບໍ່ແກ້ວ; ນອກນີ້, ຍັງມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ ແລະ ສະມາຊິກສະພາປະຊາຊົນແຂວງຫຼວງນຳທາ ປະຈຳເມືອງຫຼວງນ້ຳທາ.

ບັນດາທ່ານຜູ້ແທນກອງປະຊຸມ ໄດ້ຮັບຟັງບົດອະທິບາຍການປັບປຸງເນື້ອໃນຂອງຮ່າງລັດຖະທຳມະນູນຈາກທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ທັງເປັນຄະນະອະນຸກຳມະການເນື້ອໃນ; ຈາກນັ້ນ, ກໍໄດ້ປະກອບຄຳເຫັນທີ່ເປັນປະໂຫຍດສູງໃຫ້ແກ່ ຄລຊ ນຳໄປຄົ້ນຄວ້າ ແລະ ສືບຕໍ່ປັບປຸງໃຫ້ເປັນສະບັບສົມບູນ ເຊິ່ງກອງເລຂາກອງປະຊຸມ ຈະຮັບຮ້ອນບັນທຶກບັນດາຄຳເຫັນ ແລະ ສະຫຼຸບຜົນຂອງກອງປະຊຸມຄັ້ງນີ້ ເພື່ອລາຍງານໃຫ້ຄະນະປະຈຳການ ຄລຊ ຮັບຊາບໂດຍໄວ.

ທ່ານ ປອ. ກອງແກ້ວ ໄຊສົງຄາມ ໄດ້ກ່າວວ່າ: ກອງປະຊຸມຄັ້ງນີ້ ໄດ້ສຳເລັດລົງຢ່າງຈົບງາມ, ແຕ່ການປັບປຸງຮ່າງລັດຖະທຳມະນູນໃຫ້ເປັນສະບັບສົມບູນນັ້ນ ຍັງເປັນວຽກງານໜຶ່ງທີ່ສຳຄັນຂອງລັດເຮົາ ທີ່ຍັງຕ້ອງສືບຕໍ່ຮີບຮ້ອນເອົາໃຈໃສ່ຄົ້ນຄວ້າແລະຮຽບຮຽງ ພາຍຫຼັງສຳເລັດບັ້ນທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນໃນທົ່ວປະເທດ ເພື່ອສາມາດນຳໄປສະເໜີຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ໃນທ້າຍເດືອນມີນານີ້ ພິຈາລະນາ, ຮັບຮອງເອົາ. ທ່ານກ່າວອີກວ່າ: ການສ້າງ ແລະ ປັບປຸງລັດຖະທຳມະນູນ ເປັນວຽກງານທີ່ສຳຄັນທີ່ສຸດ, ແຕ່ການຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນເປັນຈິງ, ການນຳເອົາລັດຖະທຳມະນູນ ແລະ ກົດໝາຍ ເຂົ້າສູ່ຊີວິດຕົວຈິງຂອງທົ່ວສັງຄົມນັ້ນ ເປັນວຽກງານໜຶ່ງທີ່ມີຄວາມໝາຍສຳຄັນກວ່າການສ້າງ ແລະ ປັບປຸງລັດຖະທຳມະນູນຫຼາຍສິບເທົ່າ. ພ້ອມນັ້ນ, ທ່ານຍັງຮຽກຮ້ອງສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ຜູ້ປະກອບການທັງພາກລັດແລະເອກະຊົນ, ສະມາຊິກພັກ, ພະນັກງານ-ລັດຖະກອນ, ກຳມະກອນ, ທະຫານ, ຕຳຫຼວດ, ນັກຮຽນຮູ້ປັນຍາຊົນ ແລະ ປະຊາຊົນລາວບັນດາເຜົ່າຈົ່ງພ້ອມກັນຍົກສູງສະຕິເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃຫ້ເຂັ້ມງວດ ແລະ ສັກສິດກວ່າເກົ່າ; ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນໃນທົ່ວພັກ, ທົ່ວລັດ, ທົ່ວປວງຊົນ ບົນພື້ນຖານລັດຖະທຳມະນູນແລະກົດໝາຍ, ເດັດດ່ຽວໜຽວແໜ້ນສູ້ຊົນຜ່ານຜ່າອຸປະສັກຕ່າງໆ ເພື່ອປົກປັກຮັກສາປະເທດຊາດໄວ້ຢ່າງໝັ້ນຄົງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນຕາມເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມຢ່າງໜັກແໜ້ນ ແລະ ມີໄຊ.

**(ນາງ ອາລິນ ສຸພົມມະປະດິດ)**

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 8 ຢູ່ເມືອງໄຊ ແລະ ເມືອງນາໝໍ້



(ສພຂ)-ວັນທີ 17-21 ມັງກອນຜ່ານມາ, ທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ພ້ອມດ້ວຍທ່ານ ນາງ ທຸມມາ ປັນຍາສິດ ແລະ ທ່ານ ວິລັດ ໄຊຍະວົງ ສະມາຊິກສະພາປະຊາຊົນແຂວງ(ສສຂ)ປະຈຳເຂດເລືອກຕັ້ງເມືອງໄຊແລະຄະນະ ໄດ້ເຄື່ອນໄຫວເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ຊຸດທີ II ຢູ່ 8 ບ້ານຂອງເມືອງໄຊຄື: ຈອມອອງ, ນ້ຳປູະ, ມົກຄະ, ນາອ້ອມ, ມົກຈາກ, ຫ້ວຍອຸ່ນ, ທ່າສະເລືອງແລະນາງາມ ໂດຍການຕ້ອນຮັບຈາກຄະນະພັກ, ອົງການປົກຄອງ ແລະ ພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ ພາຍໃນ 8 ບ້ານເຂົ້າຮ່ວມ 658 ຄົນ, ຍິງ 279 ຄົນ.

ຫຼັງຈາກຮັບຟັງການລາຍງານສະພາບພົ້ນເດັ່ນໂດຍຫຍໍ້ຈາກອົງການປົກຄອງແຕ່ລະບ້ານແລະຄຳສະເໜີ, ຄວາມຂັດຂ້ອງໝອງໃຈຂອງພໍ່ແມ່ປະຊາຊົນ; ບັນດາທ່ານສະມາຊິກສະພາ ໄດ້ເຜີຍແຜ່ບົດສັງລວມຫຍໍ້ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສພຂ ອຸດົມໄຊ ຊຸດທີ II ພ້ອມທັງສະແດງຄວາມຍ້ອງຍໍຊົມເຊີຍຕໍ່ອົງການປົກຄອງບ້ານ ທີ່ໄດ້ສຸມເຫື່ອແຮງປະກອບສ່ວນເຂົ້າໃນການພັດທະນາບ້ານ ເຮັດໃຫ້ບ້ານມີຄວາມສະຫງົບໂດຍພື້ນຖານ, ປະຊາຊົນມີຊີວິດການເປັນຢູ່ດີຂຶ້ນເທື່ອລະກ້າວ; ພ້ອມນັ້ນ, ຍັງໄດ້ໃຫ້ທິດຊີ້ນຳ, ຊີ້ແຈງຕໍ່ບາງຄຳສະເໜີຂອງປະຊາຊົນ ແລະ ຈະສະຫຼຸບສັງລວມຄຳສະເໜີດັ່ງກ່າວສົ່ງໃຫ້ຄະນະປະຈຳສະພາປະຊາຊົນແຂວງ ເພື່ອຄົ້ນຄວ້າ, ປຶກສາຫາລື ທັງອອກໜັງສືນຳສົ່ງໃຫ້ພາກສ່ວນກ່ຽວຂ້ອງ ພິຈາລະນາແກ້ໄຂຕາມພາລະບົດບາດ, ສິດ ແລະ ໜ້າທີ່ ແລະ ທັນຕາມກຳນົດກັບເວລາ.

ໃນໄລຍະດຽວກັນ, ທ່ານ ນິສິດ ແກ້ວປັນຍາ ສສຊ ແລະ ທ່ານ ນາງ ແສງອາລຸນ ປັນຍາລໍ ສສຂ ປະຈຳເຂດເລືອກຕັ້ງເມືອງນາໝໍ້ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຢູ່ 10 ບ້ານຂອງເມືອງນາໝໍ້ຄື: ຕີກາ, ເຜ້ຍໄມ້ໃຫຍ່, ຜາຄຳ, ສະປີ, ເຜ້ຍໄມ້ນ້ອຍ, ນ້ຳເງິນ, ນ້ຳຍອນ, ນ້ຳແດງ, ຫົວນາ ແລະ ຫ້ວຍຫຼັກ ເຊິ່ງມີຜູ້ມີສິດເລືອກຕັ້ງເຂົ້າຮ່ວມຮັບຟັງ 1,012 ຄົນ, ຍິງ 481 ຄົນ; ພ້ອມນັ້ນ, ຍັງໄດ້ນຳເອົາເຄື່ອງນຸ່ງຫົ່ມຈຳນວນໜຶ່ງ ມອບໃຫ້ປະຊາຊົນອີກດ້ວຍ.

**(ແສງພອນ ອິນທະວົງ)**

# ສພຂ ຫົວພັນ ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8



(ສພຂ) - ພາຍຫຼັງທີ່ດຳເນີນມາເປັນເວລາ 3 ວັນ, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງຫົວພັນ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ເມື່ອວັນທີ 23 ມັງກອນຜ່ານມາ ພາຍໃຕ້ການເປັນປະທານຂອງທ່ານ ຄອນປະພັນ ເລືອງສີຈັນທອງ ປະທານສະພາປະຊາຊົນແຂວງຫົວພັນ; ເຂົ້າຮ່ວມມີທ່ານ ປອ. ຄຳແພງ ໄຊສົມແພງ ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງໆຫົວພັນ, ບັນດາທ່ານຄະນະປະຈຳພັກແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ), ເຈົ້າເມືອງໆຊຳເໜືອ, ຜູ້ຕາງໜ້າອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ພະແນກການ ແລະ ອົງການທຽບເທົ່າ, ສອງກອງບັນຊາການ, ພາກສ່ວນທຸລະກິດອ້ອມຂ້າງແຂວງ ພ້ອມດ້ວຍອະດີດການນຳພັກ-ລັດຂັ້ນແຂວງ, ສສຊ ປະຈຳເຂດເລືອກຕັ້ງທີ 8, ສສຂ ຫົວພັນ ຊຸດທີ I, ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງແຂວງຫົວພັນ ຄື: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025; ການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ; ບົດລາຍງານການເຄື່ອນໄຫວວຽກງານຂອງອົງການກວດສອບປະຈຳພາກເໜືອ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025, ບົດລາຍງານການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ 2022; ບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳ 2025 ຂອງອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງແຂວງຫົວພັນ; ການຈັດຕັ້ງປະຕິບັດວຽກງານປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງ; ບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງສະພາປະຊາຊົນແຂວງ. ນອກນີ້, ຍັງໄດ້ຮັບຟັງການຊີ້ແຈງຕໍ່ບັນຫາຕ່າງໆທີ່ສັງຄົມ ກໍຄືປະຊາຊົນບັນດາເຜົ່າໃນທົ່ວແຂວງມີຄວາມສົນໃຈຈາກທ່ານເຈົ້າແຂວງ, ບັນດາພະແນກການທີ່ກ່ຽວຂ້ອງ ແລະ ຄະນະປະຈຳສະພາປະຊາຊົນແຂວງ.

**(ເວີນທອງ ແກ້ວບຸນມີ)**

# ກອງປະຊຸມສະໄໝສາມັນເທື່ອທີ 8 ສພຂ ວຽງຈັນ




(ສພຂ) - ວັນທີ 24 ມັງກອນຜ່ານມາທີ່ສະໂມສອນໃຫຍ່ຫ້ອງວ່າການແຂວງ, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງ (ສພຂ) ວຽງຈັນ ຊຸດທີ II ໄດ້ອັດລົງຢ່າງເປັນທາງການ ຫຼັງຈາກດຳເນີນມາເປັນເວລາ 4 ວັນ ພາຍໃຕ້ການເປັນປະທານຂອງທ່ານບຸນສອນ ເຜີດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ໂດຍມີທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 10, ທ່ານ ຄຳພັນ ສິດທິດຳພາ ເຈົ້າແຂວງໆວຽງຈັນ, ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 10 ແລະ ສະມາຊິກສະພາປະຊາຊົນແຂວງວຽງຈັນ, ຄະນະປະຈຳ ແລະ ກຳມະການພັກແຂວງ ພ້ອມດ້ວຍບັນດາທ່ານເຈົ້າເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ/ອົງການ/ກົມກອງອ້ອມຂ້າງແຂວງ ຕະຫຼອດຮອດພະນັກງານທີ່ຮັບຜິດຊອບກອງປະຊຸມ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງແຂວງວຽງຈັນຄື: 1. ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການເກັບມ້ຽນຂີ້ເຫຍື້ອຢູ່ແຂວງວຽງຈັນ; 2. ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປີ 2025 ຂອງສະພາປະຊາຊົນແຂວງ; 3. ບົດລາຍງານຜົນການກວດສອບປະຈຳປີ 2023 ຂອງອົງການກວດສອບປະຈຳພາກກາງ; 4. ການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງອົງການກວດກາລັດແຂວງ; 5. ການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ທິດທາງແຜນການປີ 2025 ຂອງອົງການໄອຍະການປະຊາຊົນແຂວງ; 6. ການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ທິດທາງແຜນການປີ 2025 ຂອງສານປະຊາຊົນແຂວງ; 7. ການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ 2024 ແລະ ທິດທາງແຜນການ 2025; 8. ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ 2024 ແລະ ທິດທາງແຜນການປີ 2025.

**(ບູລາຕີ ແສນທະວົງ)**



# ປີ 2024 ອັດຕາເຕີບໂຕເສດຖະກິດ ແຂວງຄຳມ່ວນ ບັນລຸ 6.05%




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ທີ່ໄດ້ປິດລົງຢ່າງເປັນທາງການ ໃນຕອນບ່າຍຂອງວັນທີ 24 ມັງກອນຜ່ານມາ ທີ່ຫ້ອງປະຊຸມໃຫຍ່ແຂວງຄຳມ່ວນ ພາຍຫຼັງທີ່ດຳເນີນມາເປັນເວລາ 3 ວັນເຄິ່ງ ໂດຍການເປັນປະທານຂອງທ່ານ ບຸນມີ ພິມມະສອນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ທ່ານ ວັນໄຊ ພອງສະຫວັນ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໆຄຳມ່ວນ, ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ), ການນຳອົງການຈັດຕັ້ງພັກ-ລັດຂັ້ນແຂວງ, ຜູ້ອາວຸໂສ-ບຳນານ ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາເນື້ອໃນສຳຄັນດ້ວຍການອອກເປັນມະຕິ ເພື່ອເປັນບ່ອນອີງໃຫ້ແກ່ອົງການປົກຄອງແລະອົງການຈັດຕັ້ງທີ່ກ່ຽວຂ້ອງຂອງແຂວງຄຳມ່ວນ ນຳຈັດຕັ້ງປະຕິບັດ ດັ່ງນີ້:

1. ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ການຈັດຕັ້ງປະຕິບັດຄາດໝາຍພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງແຂວງ ປະຈຳປີ 2024 ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນ ການຈັດຕັ້ງປະຕິບັດຄາດໝາຍພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກຂອງແຂວງ ປະຈຳປີ 2025 ເຊິ່ງໃນ 1 ປີຜ່ານມາ ອັດຕາການເຕີບໂຕເສດຖະກິດ ບັນລຸໄດ້ 6.05%.

2. ບົດລາຍງານຂອງອົງການກວດສອບປະຈຳພາກກາງ 2 ກ່ຽວກັບການກວດສອບຄືນການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023, ແຜນການກວດສອບຄືນບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ແລະ ການຈັດຕັ້ງປະຕິບັດວຽກງານປະຈຳປີ 2024, ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2025; ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບຜົນການກວດກາຕາມຜົນການກວດສອບ ປະຈຳປີ 2022, ແຜນການກວດກາຕາມຜົນການກວດສອບປະຈຳປີ 2023 ແລະ ການຈັດຕັ້ງປະຕິບັດວຽກງານປະຈຳປີ 2024, ທິດທາງແຜນການປະຈຳປີ 2025.

3. ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ແລະສານປະຊາຊົນແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025.

4. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຂອງສະພາປະຊາຊົນແຂວງ.

5. ການສ້າງນິຕິກຳໃຕ້ກົດໝາຍ 3 ສະບັບຄື: ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ອະນຸລັກພູຫີນຄັນນາ ເມືອງທ່າແຂກ; ຮ່າງຂໍ້ຕົກລົງວ່າດ້ວຍການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງພາຍໃນແຂວງຄຳມ່ວນ ແລະ ຮ່າງຂໍ້ຕົກ ລົງວ່າດ້ວຍການຄຸ້ມຄອງຄູສອນແລະນັກຮຽນພາຍໃນແຂວງຄຳມ່ວນ.

ກອງປະຊຸມໄດ້ຮັບຟັງການຊີ້ແຈງຕໍ່ຄຳຊັກຖາມຂອງທ່ານເຈົ້າແຂວງ, ບັນດາທ່ານສະມາຊິກຂອງອົງການປົກຄອງແຂວງ 10 ກວ່າທ່ານ ເຊິ່ງສະພາປະຊາຊົນແຂວງ ໄດ້ເກັບກຳ, ສັງລວມເອົາບັນຫາເຄັ່ງຮ້ອນຂອງສັງຄົມ, ຄວາມຄິດຄວາມເຫັນຂອງພໍ່ແມ່ປະຊາຊົນມາສະເໜີໃຫ້ພະແນກການ, ອົງການທີ່ກ່ຽວຂ້ອງ ຊີ້ແຈງ, ອະທິບາຍ ໂດຍໄດ້ຖ່າຍທອດສົດທາງວິທະຍຸຢ່າງປົກກະຕິ ເພື່ອໃຫ້ປະຊາຊົນບັນດາເຜົ່າໄດ້ຕິດຕາມການປະຕິບັດໜ້າທີ່ຂອງສະພາປະຊາຊົນແຂວງ ກໍຄືອົງການປົກຄອງ, ອົງການກວດກາ ແລະ ກວດສອບ, ສານ ແລະ ອົງການໄອຍະການປະຊາຊົນແຂວງ ໄດ້ຮັບຮູ້, ເຂົ້າໃຈ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ສ້າງຄວາມເຂັ້ມແຂງໃຫ້ລະບົບນິຕິກຳ; ການລາຍງານຂອງຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ໃນການສັງລວມມະຕິຂອງ ຄປຈສພຂ ກ່ຽວກັບການພິຈາລະນາ, ຮັບຮອງບັນຫາສຳຄັນພື້ນຖານຂອງແຂວງ ໂດຍຜ່ານກອງປະຊຸມສະໄໝສາມັນ, ວິສາມັນຂອງຄະນະປະຈຳສະພາປະຊາຊົນແຂວງ ຕາມສິດ ແລະ ໜ້າທີ່ຂອງຕົນ ໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 7 ຫາເທື່ອທີ 8 ຈຳນວນ 19 ມະຕິ ເຊິ່ງປະກອບມີດ້ານເສດຖະກິດ-ສັງຄົມ 10 ມະຕິ ແລະ ດ້ານບຸກຄະລາກອນ 9 ມະຕິ. ນອກນັ້ນ, ຍັງໄດ້ປະເມີນຜົນຕໍ່ຄວາມຮັບຜິດຊອບຂອງບຸກຄະລາກອນທີ່ມາລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມຢູ່ກອງປະຊຸມ ແລະ ປະເມີນຜົນຄວາມໄວ້ວາງໃຈຕໍ່ບຸກຄະລາກອນດຳລົງຕຳແໜ່ງທີ່ ສພຂ ເລືອກຕັ້ງ ແລະ ຮັບຮອງການແຕ່ງຕັ້ງ.

**(ອານຸສອນ ພູມມີທອນ)**

# ປະທານ ສພຂ ສະຫວັນນະເຂດ ເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝສາມັນຢູ່ເມືອງວິລະບູລີ



(ສພຂ)-ວັນທີ 23-24 ມັງກອນນີ້, ທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ພ້ອມດ້ວຍທ່ານ ນາງ ທົງຄຳ ໄຊຍະຄົມ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແລະ ທ່ານ ໄພມະນີ ວົງໄຊຄຳ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງວິລະບູລີ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ສະຫວັນນະເຂດ ຊຸດທີ II ຢູ່ 3 ຈຸດຂອງເມືອງວິລະບູລີ ຄື: ບ້ານວັງມາຮັງ, ຈຸດສຸມອ່າງຄຳ (ບ້ານອ່າງຄຳ) ແລະ ຈຸດສຸມເມືອງວັງ (ບ້ານນາເຕີ) ໂດຍການຕ້ອນຮັບຂອງກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ກຳລັງ ປກຊ-ປກສ, ພະນັກງານ-ລັດຖະກອນ, ອຳນາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ.

ພາຍຫຼັງຮັບຟັງການລາຍງານການຊີ້ນຳ-ນຳພາຈັດຕັ້ງປະຕິບັດວຽກງານຂອງອຳນາດການປົກຄອງທັງ 3 ຈຸດ; ສສຊ, ສສຂ ກໍໄດ້ຜັດປ່ຽນກັນເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສພຂ ສະຫວັນນະເຂດ ຊຸດທີ II ໃຫ້ປະຊາຊົນຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈ ທັງເປັນການລົງພົບປະຜູ້ມີສິດເລືອກຕັ້ງເພື່ອເກັບກຳຄຳຄິດຄຳເຫັນຕໍ່ວຽກງານການຄຸ້ມຄອງ-ບໍລິຫານລັດອີກດ້ວຍ; ຈາກນັ້ນ, ການນຳຂອງເມືອງ, ການຈັດຕັ້ງຂັ້ນບ້ານ ກໍຄືປະຊາຊົນ ໄດ້ມີຄຳຖາມ ແລະ ຄຳສະເໜີ ເຊິ່ງສ່ວນຫຼາຍແມ່ນຕິດພັນກັບການດຳລົງຊີວິດຂອງປະຊາຊົນ, ການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນບັນຫາການພັດທະນາພື້ນຖານໂຄງລ່າງ ເປັນຕົ້ນການສ້ອມແປງຂົວ, ເສັ້ນທາງ, ຊົນລະປະທານ ແລະ ທີ່ດິນ. ບັນດາທ່ານສະມາຊິກສະພາ ກໍໄດ້ຕອບຄຳຖາມເພື່ອໃຫ້ຄວາມກະຈ່າງແຈ້ງບັນຫາຕ່າງໆຕໍ່ກັບສະພາບການອັນລວມຂອງການພັດທະນາປະເທດເຮົາໃນປັດຈຸບັນ ພ້ອມທັງຮັບເອົາຄຳສະເໜີຂອງອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ໄປນຳສະເໜີຕໍ່ຂະແໜງການກ່ຽວຂ້ອງ ເພື່ອປຶກສາຫາລືແລະ ຄົ້ນຄວ້າແກ້ໄຂໃນຂັ້ນຕໍ່ໄປ; ນອກນີ້, ສສຊ ແລະ ສສຂ ຍັງມີຄຳເຫັນຫຼາຍດ້ານຕໍ່ກັບການພັດທະນາພື້ນຖານໂຄງລ່າງ, ພັດທະນາເສດຖະກິດ, ການແກ້ໄຂບັນຫາຢາເສບຕິດ ພ້ອມທັງຮຽກຮ້ອງໃຫ້ທຸກພາກສ່ວນເປັນເຈົ້າການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ໂອກາດນີ້, ສະມາຊິກສະພາ ຍັງໄດ້ນຳເອົາອຸປະກອນການຮຽນແລະກິລາປະກອບມີ: ປຶ້ມ 900 ຫົວ, ບິກ 900 ກ້ານ, ກະຕໍ້ 9 ໜ່ວຍ ແລະ ໝາກບານ 6 ໜ່ວຍລວມມູນຄ່າ 8,850,000 ກີບ ມອບໃຫ້ແກ່ນ້ອງນ້ອຍນັກຮຽນ.

**(ຄອນສະຫວັນ ເມກສະຫວັນ)**

# ພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝສາມັນ



(ສພຂ)-ວັນທີ 17-18 ມັງກອນຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເຂດເລືອກຕັ້ງທີ 14 ສົມທົບກັບສະມາຊິກສະພາປະຊາຊົນແຂວງ (ສສຂ) ສາລະວັນ ນຳໂດຍທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະສະພາປະຊາຊົນແຂວງ (ສພຂ) ສາລະວັນຊຸດທີ II ຢູ່ບ້ານນາຂັ້ນໄດແລະບ້ານດອນໄລ່ເມືອງລະຄອນເພັງ, ບ້ານປົ່ງ ແລະ ບ້ານຕະຫຼ່າງ ເມືອງຄົງເຊໂດນ ໂດຍການຕ້ອນຮັບຈາກຄະນະພັກເມືອງ, ຄະນະພັກຮາກຖານກຸ່ມບ້ານ, ອົງການຈັດຕັ້ງບ້ານ, ພະນັກງານ-ລັດຖະກອນ, ພະນັກງານອາວຸໂສບຳນານ, ເຖົ້າແກ່ແນວໂຮມ, ພໍ່ແມ່ປະຊາຊົນ, ຄູ ແລະ ນັກຮຽນເປັນຈຳນວນຫຼາຍ.

ຫຼັງຈາກໄດ້ຮັບຟັງການລາຍງານກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມຂອງບ້ານ; ສສຊ ແລະ ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສພຂ ສາ ລະວັນ ຊຸດທີ II ທັງໄດ້ມີການແລກປ່ຽນຄຳຄິດຄຳເຫັນຕໍ່ບັນດາບັນຫາ ແລະ ຂໍ້ສະເໜີຕ່າງໆຂອງປະຊາຊົນເຊິ່ງສ່ວນໃຫຍ່ແມ່ນຕິດພັນກັບຄວາມຫຍຸ້ງຍາກດ້ານພື້ນຖານໂຄງລ່າງ, ດ້ານເສດຖະກິດ.

ການລົງເຄື່ອນໄຫວພົບປະຄັ້ງນີ້, ສະມາຊິກສະພາ ໄດ້ນຳເອົາເຄື່ອງອຸປະກອນກິລາ ແລະ ລົດຖີບທີ່ໄດ້ຮັບການຊ່ວຍເຫຼືອຈາກມູນນິທິຈີນເພື່ອພັດທະນາຊົນນະບົດ ຈຳນວນ 3 ຄັນ ມອບໃຫ້ນ້ອງນັກຮຽນທີ່ຮຽນດີ-ຮຽນເກັ່ງ ແລະ ມີຄວາມທຸກຍາກ ໃນໂຮງຮຽນຂອງເມືອງຄົງເຊໂດນ.

**(ດີລຳພົນ ພົມມະຈັນ)**

# ກອງປະຊຸມປະຈຳປີ 2024 ຂອງ ຄລຊ ເຂດເລືອກຕັ້ງທີ 14



(ສພຂ) - ວັນທີ 16 ມັງກອນຜ່ານມາທີ່ສະໂມສອນໃຫຍ່ແຂວງສາລະວັນໄດ້ມີກອງປະຊຸມຄົບຄະນະປະຈຳປີ 2024 ຂອງຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເຂດເລືອກຕັ້ງທີ 14 ແຂວງສາລະວັນ ພາຍໃຕ້ການເປັນປະທານຂອງທ່ານ ສີເຮັ່ງທອມສິມບັດປະທານຄສຊປະຈຳເຂດເລືອກຕັ້ງທີ 14 ເຊິ່ງມີທ່ານສຸບັນສະອະບຸດປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14, ທ່ານຮອງເຈົ້າແຂວງໆສາລະວັນ, ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 14, ຮອງປະທານສະພາປະຊາຊົນແຂວງ (ສພຂ), ຫົວໜ້າ-ຮອງຫົວໜ້າພະແນກການອ້ອມຂ້າງແຂວງ ເຂົ້າຮ່ວມ.

ທ່ານຂັນໄຊລັດຖະເຮົ້າຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ໄດ້ລາຍງານການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຂອງ ຄສຊ ປະຈຳເຂດເລືອກຕັ້ງທີ 14 ເຊິ່ງທ່ານໃຫ້ຮູ້ວ່າ: ຄສຊ ປະຈຳເຂດເລືອກຕັ້ງທີ 14 ໄດ້ເຂົ້າຮ່ວມພິຈາລະນາ, ຮັບຮອງເອົາກົດໝາຍໃນກອງປະຊຸມສະໄໝສາມັນເທື່ອທີ 7 ແລະ ເທື່ອທີ8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ຈຳນວນ 22 ສະບັບ ໃນນັ້ນ, ສ້າງໃໝ່ 4 ສະບັບ ແລະ ປັບປຸງ 18 ສະບັບ; ປະສານສົມທົບກັບຄະນະກຳມະການລະດັບຊາດ ແລະ ອົງການປົກຄອງແຂວງໃນການກະກຽມ ແລະ ຈັດກອງປະຊຸມສຳມະນາປະເມີນຜົນການປະຕິບັດລັດຖະທຳມະນູນ ສະບັບປີ 2015; ຊຸກຍູ້ສົມທົບກັບສະພາປະຊາຊົນແຂວງໃນການສ້າງ ແລະ ປັບປຸງນິຕິກຳທີ່ສຳຄັນຂອງແຂວງ ທີ່ນຳເຂົ້າຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 6 ແລະ ເທື່ອທີ 7 ຂອງ ສພຂ ຈຳນວນ 4 ສະບັບ ໃນນັ້ນ, ສ້າງໃໝ່ 3 ສະບັບ ແລະ ປັບປຸງ 1 ສະບັບ; ປະສານສົມທົບກັບສະພາແຫ່ງຊາດ, ອົງການປົກຄອງແຂວງ ຈັດການທາບທາມຮ່າງກົດໝາຍ 3 ຄັ້ງ ຈຳນວນ 13 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX; ນອກນັ້ນ, ຍັງຕິກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ, ທ້ອງຖິ່ນ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍຂອງບັນດາອົງການລັດ ທີ່ໄດ້ກຳນົດໄວ້ໃນກົດໝາຍແລະບັນດາມະຕິ, ນິຕິກຳ ທີ່ສະພາແຫ່ງຊາດຮັບຮອງພ້ອມທັງເຄື່ອນໄຫວພົບປະປະຊາຊົນຜູ້ມີສິດເລືອກຕັ້ງຢ່າງປົກກະຕິເພື່ອຢ້ຽມຢາມຖາມຂ່າວທັງເກັບກຳເອົາຄຳສະເໜີ, ຄວາມຂັດຂ້ອງໝອງໃຈຕ່າງໆ ແລະ ວຽກງານແກ້ໄຂຄຳຮ້ອງຂໍຄວາມເປັນທຳ ແລະ ຄຳສະເໜີຂອງປະຊາຊົນ.

ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບ ແລະ ພິຈາລະນາຢ່າງເລິກເຊິ່ງ.

**(ຄຳລຳພົນ ພົມມະຈັນ)**

# ຄສຊ ປະຈຳເຂດເລືອກຕັ້ງທີ 17 ປະຊຸມປະຈຳປີ 2024

(ສພຂ) - ຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ໄດ້ຈັດກອງປະຊຸມປະຈຳປີ 2024 ເມື່ອວັນທີ 22 ມັງກອນຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17; ມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ, ພະແນກການແລະອົງການທຽບເທົ່າພະແນກການອ້ອມຂ້າງແຂວງ ພ້ອມດ້ວຍແຂກທີ່ຖືກເຊີນ ເຂົ້າຮ່ວມ.



ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ວາງທິດທາງແຜນການປີ 2025 ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17 ແລະ ຄົ້ນຄວ້າປຶກສາຫາລືວຽກງານສຳຄັນຈຳນວນໜຶ່ງ. ທ່ານ ນາງ ພອນມະນີຂຽນໄຊຍະວົງຮອງປະທານຄສຊປະຈຳເຂດເລືອກຕັ້ງທີ17 ໃຫ້ຮູ້ວ່າ: ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17 ໄດ້ເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ, ພິຈາລະນາ ແລະຮັບຮອງເອົາການສ້າງແລະປັບປຸງກົດໝາຍຮ່ວມກັບຄະນະສະມາຊິກສະພາແຫ່ງຊາດທົ່ວປະເທດ ທີ່ໄດ້ສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ແລະ ເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ມີ 22 ສະບັບ ໃນນີ້, ສ້າງ ໃໝ່ 4 ສະບັບ ແລະ ປັບປຸງ 18 ສະບັບ; ທາບທາມຄຳເຫັນໃສ່ຮ່າງກົດໝາຍທີ່ສະພາແຫ່ງຊາດແນະນຳ ກໍຄືພາກສ່ວນກ່ຽວຂ້ອງສົ່ງໃຫ້ ໄດ້ 3 ຄັ້ງ ມີ 13 ກົດໝາຍ; ປະກອບຄຳເຫັນ, ຄົ້ນຄວ້າພິຈາລະນາ ແລະ ຮັບຮອງບັນຫາສຳຄັນພື້ນຖານຂອງຊາດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ມີ 23 ຫົວຂໍ້ໃຫຍ່ ແລະຮັບຮອງອອກເປັນມະຕິກອງປະຊຸມສະພາແຫ່ງຊາດ 42 ສະບັບ; ເຂົ້າຮ່ວມເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ ໄດ້ 10 ຄັ້ງ; ພົວພັນປະສານສົມທົບກັບສະພາປະຊາຊົນແຂວງ ເພື່ອຄົ້ນຄວ້າເນື້ອໃນຄຳສະເໜີຂອງປະຊາຊົນທີ່ສະເໜີຜ່ານໂທລະສັບສາຍດ່ວນ ແລະ ນຳສົ່ງ ພ້ອມທັງຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂແຕ່ລະບັນຫາ ເພື່ອລາຍງານໃຫ້ສະພາແຫ່ງຊາດທັນຕາມເວລາ ມີ 17 ບັນຫາ; ປະສານສົມທົບກັບພາກສ່ວນກ່ຽວຂ້ອງທັງສູນກາງ ແລະ ພາຍໃນທ້ອງຖິ່ນ ຄົ້ນຄວ້າ, ປະກອບຄຳເຫັນຕໍ່ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ 15 ເລື່ອງ; ລົງພົບປະຜູ້ມີສິດເລືອກຕັ້ງ 57 ຈຸດ ມີຜູ້ເຂົ້າຮ່ວມ 5,775 ຄົນ; ເຄື່ອນໄຫວຢ້ຽມຢາມ, ຖອດຖອນບົດຮຽນແຂວງໃກ້ຄຽງ ແລະຕ້ອນຮັບຄະນະຜູ້ແທນຂັ້ນສູງຈາກ ສສ.ຫວຽດນາມ ແລະ ບັນດາປະເທດເພື່ອນບ້ານ 5 ຄັ້ງ.

ຜູ້ເຂົ້າຮ່ວມໄດ້ແລກປ່ຽນ, ປະກອບຄຳເຫັນໃສ່ຮ່າງບົດສະຫຼຸບຢ່າງກົງໄປກົງມາ, ມີຈຸດສຸມບົນພື້ນຖານແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ສະພາບຄວາມເປັນຈິງຂອງທ້ອງຖິ່ນເພື່ອເຮັດໃຫ້ເນື້ອໃນມີຄວາມຄົບຖ້ວນສົມບູນແລະສອດຄ່ອງກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງ ຄສຊ ປະຈຳເຂດເລືອກຕັ້ງທີ 17 ໃຫ້ມີຄຸນນະພາບ ແລະ ສາມາດຈັດຕັ້ງປະຕິບັດຕາມພາລະບົດໄດ້ຮັບຜົນສຳເລັດຫຼາຍຂຶ້ນກວ່າເກົ່າ.

**(ວິມັດ ສີສຸລາດ)**



# ສພຂ ໄຊສົມບູນ ຮັບຮອງການແຕ່ງຕັ້ງຫົວໜ້າກຳລັງປະກອບອາວຸດ



(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ຊຸດທີ II ໄດ້ອັດລົງຢ່າງຈົບງາມໃນວັນທີ 24 ມັງກອນຜ່ານມາທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຂອງທ່ານ ແດງ ປະທຸມທອງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ພອຍຄຳຮຸ່ງບຸນຍວງເລຂາພັກແຂວງ, ເຈົ້າແຂວງໆໄຊສົມບູນ, ບັນດາການນຳຂັ້ນສູງຂອງແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ບັນດາພະແນກການ, ອົງການ, ກົມກອງອ້ອມຂ້າງແຂວງ ຕະຫຼອດຮອດພະນັກງານອາວຸໂສບຳນານ, ວິສາຫະກິດທັງພາກລັດ ແລະ ເອກະຊົນ.

ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນຂອງແຂວງໄຊສົມບູນ ຄື: ຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຕິດພັນກັບດຳລັດ 414/ລບ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງແຂວງ; ບົດລາຍງານຜົນການປະເມີນຕາມດຳລັດ 348/ລບ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາທົ່ວແຂວງ ປະຈຳປີ 2023-2024 ແລະ ການແກ້ໄຂຄວາມທຸກຍາກປະຈຳປີ 2024; ແຕ່ງຕັ້ງທ່ານ ພັອ. ອຸໄດ ອິນສຸວັນ ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ (ປກສ) ແຂວງ ເປັນຫົວໜ້າກອງບັນຊາການ ປກສ ແຂວງ ແລະ ທ່ານ ພັອ. ວົງພັນ ດາບຸດດີ ຮັກສາການຫົວໜ້າການທະຫານກອງບັນຊາການທະຫານແຂວງເປັນຫົວໜ້າການທະຫານກອງບັນຊາການທະຫານແຂວງ; ແຜນການເຄື່ອນໄຫວການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ປີ 2024-2025; ບົດລາຍງານຂອງອົງການກວດສອບປະຈຳພາກພາງ 1 ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ແລະ ຄງການລົງທຶນຂອງລັດປະຈຳປີ 2023; ບົດລາຍງານຂອງອົງການກວດກາລັດແຂວງກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2025; ບົດລາຍງານຂອງອົງການໄອຍະການ ແລະ ສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025; ບົດລາຍງານແຜນການການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ II.

ນອກນັ້ນ, ຍັງໄດ້ຮັບຟັງການອະທິບາຍ, ຊີ້ແຈງຈາກພະແນກການ, ອົງການ ແລະ ກົມກອງ ຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາ ສສຂ.

**(ອຳໄພພອນ ແກ້ວວິໄລ)**




# ໝູນໄປຕາມໂລກ

**# ດົ້ນກົບເມກ**

ກະແສໂລກມັນຈະຮຸນແຮງ ດຶງແກ່ຄົນເຮົາໃຫ້ໝູນໄປຕາມກະແສ ເຊິ່ງບາງຄົນໄປບໍ່ທັນກະແສການປ່ຽນແປງ ກໍຕົກຫຼົ່ນ ຫຼື ລົ້ມເຫຼວໃນຊີວິດ ຕົວຢ່າງ: ການສະຫຼອງປີໃໝ່ໝູນວຽນຜ່ານໄປ ຖິ້ມປະໄວ້ພຽງແຕ່ບົດຮຽນລາຄາແພງວ່າ ປີໜຶ່ງຜ່ານມາເຮົາໄດ້ກ້າວໜ້າໃນຊີວິດຫຍັງແນ່! ຜູ້ມີຕົ້ນທຶນຊີວິດສູງກໍອາດສຳເລັດເປັນກອບກຳ ແຕ່ຜູ້ຕົ້ນທຶນຕ່ຳກໍຕ້ອງໃຊ້ເວລາສູ້ຕໍ່ໄປ.

ສັງຄົມເວົ້າກັນວ່າ: ຜູ້ຕົ້ນທຶນດີກໍສຳເລັດໄວ ທັງໄກ ແລະ ໃກ້ ຜູ້ຕົ້ນທຶນຕ່ຳກໍເນັ້ນໄລຍະຍາວນານເພາະວ່າຄວາມພ້ອມຂອງຄົນບໍ່ເທົ່າກັນ, ບາງຄົນບຸກບືນຢາກ ໄດ້ທໍ່ກັບໝູ່ບາງຄັ້ງກໍສຳເລັດ ແຕ່ຢູ່ໄດ້ບໍ່ດົນ ເພາະສູນເສຍສຸຂະພາບ ຮ່າງກາຍຂອງຄົນເຮົາມີພະລັງງານຈຳກັດ; ແຂ່ງລົດແຂ່ງເຮືອນັ້ນໄດ້ ແຕ່ຢ່າແຂ່ງບຸນວາດສະໜາ ບູຮານເວົ້າໄວ້, ແຕ່ຄວາມເປັນຈິງ ບຸນວາດສະໜາ ເກີດຈາກພຶດຕິກຳໂຕຈິງຂອງຄົນທີ່ຕ່າງກັນ ບາງຄົນອາດມີບຸນເກົ່າເປັນທຶນສູງຢູ່ແລ້ວ ຈຶ່ງບໍ່ສາມາດແຂ່ງກັນໄດ້. ເລື່ອງໝູນໄປຕາມໂລກນັ້ນ ເປັນປົກກະຕິຊີວິດຄົນເຮົາບໍ່ມີໃຜຢຸດນິ້ງໄດ້ ບໍ່ກ້າວໜ້າທາງໜຶ່ງ ເຂົາກໍຫາວິທີອື່ນ ສຳລັບຄົນບໍ່ຍອມແພ້ງ່າຍດາຍ.

ການໝູນຊີວິດໄປຕາມກະແສໂລກ ບຸກຄົນຍ່ອມພົບກັບຄວາມໂຊກດີ-ໂຊກຮ້າຍ ພາສາທຳມະເວົ້າວ່າ: ມີລາບກໍເສື່ອມລາບ ມີຍົດກໍເສື່ອມຍົດ, ມີນິນທາກໍມີສັນ ລະເສີນ ແລະ ມີສຸກກໍມີທຸກປົນກັນໄປ ບໍ່ມີໃຜຫຼີກລ່ຽງໄດ້ຈັກຢ່າງ; ຖ້າເວົ້າເລື່ອງແຂ່ງຂັນໃນອຳນາດໜ້າທີ່ຕຳແໜ່ງ ກໍມີຜູ້ຂຶ້ນຜູ້ລົງ, ຜູ້ຂຶ້ນກໍສຸກໃຈ ຜູ້ລົງກໍທຸກໃຈ ບາງຄົນທີ່ຮັບບໍ່ໄດ້ກໍຕອມໃຈ ທຳມະຂ້າງເທິງນັ້ນ ຈຶ່ງເປັນຂອງຄູ່ຊີວິດຄູ່ໂລກຂອງມະນຸດ ບໍ່ມີໃຜໜີໄດ້.

ຊີວິດທີ່ມີລົມຫາຍໃຈກໍຕ້ອງຝ່າຟັນຕໍ່ໄປ, ສຸກ-ທຸກ ຂຶ້ນຢູ່ກັບວິທີຄິດ-ວິທີທາ ແລະ ວິທີປົງ ຮູ້ຈັກປົງປ່ອຍວາງກໍດີ ບາງທີກໍພາໃຫ້ຊີວິດຍືນຍາວສຸຂະພາບດີຂຶ້ນ, ແຕ່ກໍໜ້າຄິດ ລາບຍົດສັນລະເສີນມັນຫອມຫວນ ໄດ້ແລ້ວກໍບໍ່ຢາກປ່ອຍວາງນໍ!






# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

ແຕ່ຕ້ອງຊ້າໆເອົາບົດຮຽນເຫຼົ່ານັ້ນມາໃຊ້. ຖ້າວ່າເຫັນຜູ້ອື່ນເຮັດແນວໃດ ຕົນກໍມາເຮັດຄືກັນໂລດ ກໍແມ່ນເຮັດແບບກົນຈັກ. ຕົວຢ່າງກໍຄືໄດ້ຍິນເພິ່ນເວົ້າວ່າຕໍ່ສູ້ຊົນຊັ້ນຕົນກໍມາວາງຄຳຂວັນວ່າຕໍ່ສູ້ຊົນຊັ້ນໂດຍບໍ່ກວດກາເບິ່ງສະພາບການຕົວຈິງຂອງປະເທດຕົນວ່າມັນເໝາະສົມ ຫຼື ບໍ່ວ່າເຮັດແນວໃດຈຶ່ງຈະຖືກ ດັ່ງນັ້ນແມ່ນບໍ່ຊ່າງເອົາບົດຮຽນປະເທດອື່ນມາໃຊ້.

ກົງກັນຂ້າມ, ບົດຮຽນປະເທດອື່ນ ແລະ ບົດຮຽນພາຍໃນປະເທດເຮົາທີ່ວ່າໃຫ້ໃກ້ຊິດປະຊາຊົນ, ລົງເລິກໃນໝູ່ປະຊາຊົນນັ້ນເປັນອັນຖືກຕ້ອງ. ພວກເຮົາຕ້ອງເອົາບົດຮຽນນີ້ມາໃຊ້.

ບົດຮຽນປະເທດອື່ນ ແລະ ບົດຮຽນໃນປະເທດບອກວ່າ ຕ້ອງເດັດດ່ຽວຕ້ານພະຍາດໃນເຮົາ, ພະຍາດໃຈຄັບແຄບ ແລະ ພະຍາດເປັນແຕ່ປາກ. ພວກເຮົາຕ້ອງເດັດດ່ຽວຕ້ານຢັນພະຍາດເຫຼົ່ານັ້ນ ເພາະວ່າພວກເຮົາມັກເຄີຍຕິດພະຍາດເຫຼົ່ານັ້ນ ແລະ ພະຍາດດັ່ງກ່າວນັ້ນພາໃຫ້ເສຍຫາຍເຖິງວຽກງານ ແລະ ເສຍຫາຍໃຫ້ພັກ.

ການຮ່ຳຮຽນ: ຂອບເຂດຂອງການຮ່ຳຮຽນໄດ້ແບ່ງອອກເປັນຫຼາຍຢ່າງຄື: ຝ່າຍວິທະຍາສາດການເມືອງ, ວິທະຍາສາດເສດຖະກິດ, ວິທະຍາສາດປະຫວັດສາດ ແລະ ອື່ນໆເຊິ່ງພວກເຮົາຈະຕ້ອງຄ່ອຍໆຮຽນແຕ່ລະຢ່າງ.

ການຮ່ຳຮຽນຕ້ອງເຮັດຕາມຫຼັກທີ່ວ່າ: "ບົດຮຽນແຕ່ລະວຽກງານ ຕົວຈິງຕ້ອງໄປພ້ອມກັນ". ຍົກຕົວຢ່າງຄື: ໃນດ້ານວິທະຍາສາດການເມືອງແມ່ນໃຊ້ປຶ້ມທິດສະດີ ແລະ ໃຊ້ບົດໜັງສືພິມເວົ້າຫຼັກຍຸດທະສາດ ແລະ ຍຸດທະວິທີເປັນເອກະສານ ໃນດ້ານທິດສະດີ; ເອົາປະຫວັດສາດ ແລະ ບົດຮຽນໃນການຕໍ່ສູ້ຂອງພັກເປັນເອກະສານໃນດ້ານວຽກການຕົວຈິງ. ໃນດ້ານວິທະຍາສາດເສດຖະກິດແມ່ນໃຊ້ "ເສດຖະສາດການເມືອງ" ເປັນເອກະສານໃນດ້ານທິດສະດີ, ໃຊ້ປະຫວັດສາດການເສດຖະກິດບ້ານເມືອງເຮົາຕັ້ງແຕ່ 100 ປີມານີ້ເປັນເອກະສານໃນດ້ານວຽກງານຕົວຈິງ. ໃນຝ່າຍອື່ນກໍໃຫ້ເຮັດຄືກັນ.

ອ່ານຕໍ່ສະບັບໜ້າ...




## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ນິຕິກຳທີ່ສຳຄັນຈຳນວນໜຶ່ງຮັບປະກັນໃຫ້ແກ່ວຽກງານຂອງ ຄລສ, ບັນດາກົງຈັກພາຍໃນ ສພຊ ແລະ ຄະນະເລຂາທິການ ສພຂ ເປັນບ່ອນອີງໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ທັນກັບສະພາບ ການເຄື່ອນໄຫວໃນປັດຈຸບັນ, ໃນໄລຍະໃໝ່.

ວັນທີ 25-26 ມັງກອນນີ້ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມຄະນະເລຂາທິການສະພາແຫ່ງຊາດ ປະຈຳປີ 2024 ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ; ມີບັນດາທ່ານຮອງປະທານກຳມາທິການ, ຮອງເລຂາທິການ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສພຊ, ເລຂາທິການ-ຮອງເລຂາທິການສະພາປະຊາຊົນແຂວງ-ນະຄອນຫຼວງ ພ້ອມດ້ວຍຄະນະກົມ, ສູນ ແລະ ຫ້ອງການ, ຄະນະພະແນກ ແລະ ລັດຖະກອນຈາກ ສພຊ ເຂົ້າຮ່ວມຫຼາຍກວ່າ 120 ທ່ານ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ມີຄຳເຫັນວ່າ: ໃນໄລຍະປີ2024ຜ່ານມາໃນນາມກົງຈັກທີ່ເປັນເສນາທິການທີ່ຮັບໃຊ້ວຽກງານຢ່າງໃກ້ຊິດຂອງສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ມີຄວາມພະຍາຍາມ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດພາລະບົດບາດ, ສິດແລະໜ້າທີ່ຂອງຕົນ ໃນການຈັດຕັ້ງຜັນຂະຫຍາຍແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດເຊິ່ງສາມາດຈັດຕັ້ງປະຕິບັດວຽກງານມີຜົນສຳເລັດເປັນຢ່າງດີ ສະແດງອອກໃນການເປັນເສນາທິການການກະກຽມວຽກງານຮອບດ້ານ ເປັນຕົ້ນດ້ານເນື້ອໃນໃນການຮັບໃຊ້ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ, ກອງປະຊຸມຄະນະປະທານຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງ; ວຽກງານການປັບປຸງກົງຈັກການຈັດຕັ້ງ, ການກໍ່ສ້າງແລະບຳລຸງສ້າງພະນັກງານ, ວຽກງານບໍລິຫານ-ພິທີການ, ວຽກງານການເງິນ, ວຽກງານສື່ມວນຊົນ, ວຽກງານກວດກາ, ວຽກງານຄຸ້ມຄອງຫໍສະພາແຫ່ງຊາດ, ການອຳນວຍຄວາມສະດວກໃຫ້ການເຄື່ອນໄຫວຢູ່ພາຍໃນ ແລະ ຕ່າງປະເທດ, ການປັບປຸງແບບແຜນວິທີເຮັດວຽກຢູ່ພາຍໃນຄະນະເລຂາທິການສະພາແຫ່ງຊາດ, ຄວາມເປັນເຈົ້າການຂອງພະນັກງານ-ລັດຖະກອນທີ່ຮັບຜິດຊອບວຽກຕ່າງໆ ເຊິ່ງເປັນເງື່ອນໄຂອຳນວຍໃຫ້ແກ່ການເຄື່ອນໄຫວວຽກງານລວມຂອງສະພາແຫ່ງຊາດໄດ້ມີການຫັນປ່ຽນຢ່າງຕັ້ງໜ້າ ແລະ ໄດ້ຮັບການປັບປຸງໃຫ້ມີຄວາມສອດຄ່ອງດີຂຶ້ນເປັນກ້າວໆ; ທັງໝົດນັ້ນ ແມ່ນຍ້ອນໄດ້ຮັບຄວາມເອົາໃຈໃສ່ຊີ້ນຳຢ່າງໃກ້ຊິດຈາກຄະນະພັກ, ຄະນະປະຈຳ ແລະການສະໜັບສະໜູນຮ່ວມມືເປັນຢ່າງດີຈາກບັນດາກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດເປັນຕົ້ນ:ບັນດາກຳມາທິການ, ສະຖາບັນຄົ້ນຄວ້ານິຕິກຳ, ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ກໍຄືພາກສ່ວນກ່ຽວຂ້ອງຕ່າງໆ. ຄຽງຄູ່ກັບຜົນງານ ແລະ ຜົນສຳເລັດໃນ 1 ປີຜ່ານມາ, ກໍຍັງພົບກັບຄວາມຫຍຸ້ງຍາກສິ່ງທ້າທາຍຈຳນວນໜຶ່ງ ທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂໃນຊຸມປີຕໍ່ໜ້າ ເປັນຕົ້ນ: ກົນໄກການແກ້ໄຂວຽກບາງດ້ານຍັງຊັກຊ້າ, ການປະສານວຽກງານຈຳນວນໜຶ່ງຍັງບໍ່ທັນໂລ່ງລ່ຽນ; ການປັບປຸງກົງຈັກການຈັດຕັ້ງ, ການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ບາງອັນຍັງຊໍ້າຊ້ອນ; ການບຳລຸງສ້າງບຸກຄະລາກອນທີ່ເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ຍັງບໍ່ຕໍ່ເນື່ອງ, ຂາດການປະເມີນຕິດຕາມຊຸກຍູ້ກໍ່ສ້າງ; ການສະໜອງອຸປະກອນຮັບໃຊ້ວຽກງານຕ່າງໆຍັງບໍ່ທັນຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຕົວຈິງ.

ຜູ້ເຂົ້າຮ່ວມໄດ້ຮັບຟັງບັນດາເອກະສານທີ່ສຳຄັນຄື: ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາແຫ່ງຊາດ ປະຈຳປີ 2024 ແລະ ແຜນການປະຈຳປີ 2025 ໂດຍທ່ານສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ; ບົດປະກອບຄຳເຫັນການເປັນເສນາທິການດ້ານວຽກງານຈັດຕັ້ງ-ພະນັກງານ ຈາກທ່ານເລຂາທິການສະພາປະຊາຊົນແຂວງຜົ້ງສາລີ; ບົດປະກອບຄຳເຫັນການເປັນເສນາທິການດ້ານເນື້ອໃນໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ຈາກທ່ານເລຂາທິການສະພາປະຊາຊົນແຂວງຄຳມ່ວນ; ບົດປະກອບຄຳເຫັນການຈັດຕັ້ງປະຕິບັດວຽກງານບໍລິຫານ ແລະ ການຄຸ້ມຄອງໂຄງການລົງທຶນ ຈາກທ່ານເລຂາທິການສະພາປະຊາຊົນແຂວງໄຊສົມບູນ; ເຜີຍແຜ່ມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການປະເມີນຄວາມໄວ້ວາງໃຈຕໍ່ບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງແລະຮັບຮອງເອົາການແຕ່ງຕັ້ງ ໂດຍທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ. ຈາກນັ້ນ, ກໍໄດ້ສຸມໃສ່ຄົ້ນຄວ້າ, ຕີລາຄາ, ແລກປ່ຽນບົດຮຽນແລະປະກອບຄຳເຫັນໃສ່ບັນດາເນື້ອໃນທີ່ໄດ້ນຳເຂົ້າມາປຶກສາຫາລືເພື່ອຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ສາເຫດ ແລະ ສະເໜີວິທີການແກ້ໄຂຢ່າງກົງໄປກົງມາເຊິ່ງຈະເປັນຂໍ້ມູນນຳໄປປັບປຸງ, ແກ້ໄຂວຽກງານໃນຕໍ່ໜ້າ.

**(ຂ່າວ: ນາງ ສຸພາວັນ ທອມສະນິດ; ພາບ: ສອນສັກ ວັນວິໄຊ)**



## ສຳເລັດ...

(ຕໍ່ຈາກໜ້າ 1)

(ສພຊ)-ວັນທີ 21-22 ມັງກອນ 2025 ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ (ສພຊ) ແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມລັດຖະສະພາກ່ຽວກັບການຮ່ວມມືຂອງບັນດາປະເທດທີ່ໃຊ້ພາສາຝຣັ່ງ ໃນ 3 ຫົວຂໍ້ສຳຄັນຄື: ກະສິກຳແບບຍືນຍົງ, ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການປ່ຽນແປງດິນຟ້າອາກາດ ທີ່ນະຄອນເກີນເທີ, ສສ.ຫວຽດນາມ ເຊິ່ງແມ່ນຂໍ້ລິເລີ່ມຂອງສະພາແຫ່ງຊາດຫວຽດນາມ ໃນໂອກາດເປັນເຈົ້າພາບຈັດກອງປະຊຸມດັ່ງກ່າວ ແລະ ກອງປະຊຸມຄະນະບໍລິຫານງານສະມັດຊາລັດຖະສະພາບັນດາປະເທດທີ່ໃຊ້ພາສາຝຣັ່ງ (APF); ມີຄະນະຜູ້ແທນຈາກປະເທດທີ່ໃຊ້ພາສາຝຣັ່ງ 17 ປະເທດ ພ້ອມດ້ວຍຜູ້ຕາງໜ້າຈາກອົງການອາຫານແລະການກະເສດຂອງສະຫະປະຊາຊາດ (FAO), ອົງການຝຣັ່ງໂກໂຟນີສາກົນ (OIF) ແລະ ເລຂາທິການໃຫຍ່ສະມັດຊາລັດຖະສະພາບັນດາປະເທດທີ່ໃຊ້ພາສາຝຣັ່ງ, ບັນດາການນຳຂັ້ນສູງ ແລະ ກຳມາທິການທີ່ກ່ຽວ ຂ້ອງຂອງສະພາແຫ່ງຊາດຫວຽດນາມ, ການນຳພັກ-ລັດ ແລະ ພະແນກການຂອງນະຄອນເກີນເທີ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງຄຳປາໄສເປີດຂອງທ່ານ ເຈິ່ນ ແທ່ງ ເໝິນ ປະທານສະພາແຫ່ງຊາດຫວຽດນາມ ແລະ ຮັບຟັງການລາຍງານສະພາບການຂອງແຕ່ລະຫົວຂໍ້ຈາກຜູ້ຊ່ຽວຊານຂົງເຂດຕ່າງໆໃນບັນດາປະເທດທີ່ໃຊ້ພາສາຝຣັ່ງ; ນອກນີ້, ຍັງໄດ້ຮັບຟັງການສະເໜີບົດຮຽນທີ່ດີ ຈາກຜູ້ຕາງໜ້າອົງການນິຕິບັນຍັດຂອງ APF ກ່ຽວກັບການປ່ຽນແປງດິນຟ້າອາກາດ, ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນກ່ຽວກັບຫຼາຍບັນຫາສຳຄັນທີ່ເປັນສິ່ງທ້າທາຍແລະຄວາມກັງວົນຮ່ວມກັນຂອງແຕ່ລະພາກພື້ນ ໂດຍສະເພາະແມ່ນໃນບັນດາປະເທດທີ່ໃຊ້ພາສາຝຣັ່ງ.

ການເຂົ້າຮ່ວມກອງປະຊຸມຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ຮ່ວມສະເໜີບົດຄຳເຫັນພາຍໃຕ້ 3 ຫົວຂໍ້ຕົ້ນຕໍຂອງກອງປະຊຸມ ເຊິ່ງໄດ້ເນັ້ນໜັກເຖິງການເອົາໃຈໃສ່ປັບປຸງ ແລະ ພັດທະນາໃນຂົງເຂດກະສິກຳ, ການຜະລິດສະບຽງອາຫານໃຫ້ມີຄວາມໝັ້ນຄົງ ແລະ ພຽງພໍແກ່ປະຊາຊົນ ແລະ ສາມາດສົ່ງອອກເພື່ອເປັນຊ່ອງທາງສ້າງລາຍຮັບເຂົ້າປະເທດ ພ້ອມທັງໃຫ້ຄວາມສຳຄັນຕໍ່ການຫັນເປັນສັງຄົມສີຂຽວ, ການຄຸ້ມຄອງ ແລະ ຮັບມືຕໍ່ກັບການປ່ຽນແປງດິນຟ້າອາກາດ ໃຫ້ສາມາດຫຼຸດຜ່ອນສະພາວະເຮືອນແກ້ວ, ມົນລະພິດທີ່ເກີດຂຶ້ນຈາກໂຮງງານ ແລະ ການຖາງປ່າເຮັດໄຮ່ ເພື່ອເປັນການຫຼຸດຜ່ອນສະພາບອາກາດທີ່ເປັນພິດຕໍ່ຮ່າງກາຍມະນຸດ.

ໃນຕອນທ້າຍ, ກອງປະຊຸມໄດ້ຮັບຮອງເອົາຖະແຫຼງການເກີນເທີ ກ່ຽວກັບການຮ່ວມມືຂອງບັນດາປະເທດທີ່ໃຊ້ພາສາຝຣັ່ງ ໃນຂົງເຂດກະສິກຳແບບຍືນຍົງ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຮັບປະກັນຕໍ່ການປ່ຽນແປງດິນຟ້າອາກາດ.

ໂອກາດເຂົ້າຮ່ວມກອງປະຊຸມຄັ້ງນີ້, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດລາວ ຍັງໄດ້ເຂົ້າຢ້ຽມພົບປະເຮັດວຽກກັບຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດຫວຽດນາມ ນຳໂດຍທ່ານ ເຈິ່ນ ແທ່ງ ເໝິນ, ພົບປະອຳນາດການປົກຄອງທ້ອງຖິ່ນຂອງນະຄອນເກີນເທີ, ຢ້ຽມຢາມບັນດາພື້ນຖານດ້ານເສດຖະກິດ-ສັງຄົມ ໂດຍສະເພາະດ້ານກະສິກຳ ແລະ ອຸດສາຫະກຳ ຂອງນະຄອນ ເກີນເທີ ແລະ ນະຄອນ ໂຮ່ ຈີ ມິງ.

ອາດ ກະວີລາວ

## ເພື່ອເຈົ້າ

**# ອຳມະຕະ ທິດສະຣາຊ**

❊ ຍາມຂ້ອນເດິກມໍ່ແຈ້ງ
ກ້ອງກັງວານເນືອງນັນ
ຊີວິດຂອງຊາວບ້ານ
ຕື່ນກ່ອນແສງສ່ອງຟ້າ
ສຽງໄກ່ມັນຂັນ
ສົ່ງສຽງຍາມເຊົ້າ
ຊົນນະບົດເບື້ອງບ່ອນ
ຕາເວັນພົ້ນຂອບຄຳ ພຸ້ນແລ້ວ!

❊ ເຖິງຊິໜາວແນບເນື້ອ
ເດີນສູ່ດົງດອນໜາ
ຫາເກັບຜັກຫັກໄມ້
ທັງເຫັດບົດພໍ່າພ້ອມ
ເອົາເສື້ອຫົ່ມຮົມຄີງ
ບ່ອນທະນີຄວນຮ້ອງ
ມາແກງເອາະອ່ອມ
ຢາໄສ້ສືບວັນ ລູກເອີຍ

❊ ບາງມື້ເດີນດຸ່ງດົ້ນ
ຫາຂີ້ຊີມາຂາຍ
ມີອັນໃດເຂົາຊື້
ແມ່ຊອກຊຸດກົ່ນໄງ້
ໂຄກໃຫຍ່ຫາເລາະ
ເພື່ອອອມເງິນໃຊ້
ໃນດົງດອນປ່າ
ຂາຍຄ້າສິ່ງເຂົາ

❊ ເງິນທຸກອັດແມ່ໄດ້
ໄດ້ມາໂດຍສຸດຈະລິດ
ເກັບທ້ອນແຮໂຮມໄວ້
ສິ້ນເດືອນມາຝາກໃຫ້
ແສນທີ່ພູມໃຈ
ເຫື່ອແຮງໄຫຼຍ້ອຍ
ເພື່ອສາຍໃຈຂອງແມ່
ບຸດໄດ້ຈ່າຍຄ່າເທີມ

❊ ສິ່ງທີ່ຫວັງຕໍ່ໜ້າ
ເຖິງເມື່ອຍກາຍໂຮຍແຮງ
ໃຜຊິວາຈາເວົ້າ
ຊີວິດຍັງບໍ່ສິ້ນ
ອtນາຄົດຕໍ່ຄຳແພງ
ແຕ່ໃຈຈິງກ້າ
ດູແຄນດູມິ່ນ ຕາມທ້ອນ
ຊູຫວັງເວົ້າແມ່ຊິຖອຍ ວ່າແລ້ວ !

❊ ລູກເອີຍ ! ແພງຈິ່ງໄດ້
ພັດທະນາຕົນເອງ
ແມ່ນີ້ຍັງຄອຍຖ້າ
ເມື່ອຍສ່ຳໃດ ແມ່ຄິດເຫັນໜ້າເຈົ້າ
ເອົາໃຈໃສ່ສຶກສາ
ຮ່ຳຮຽນຂຽນຄົ້ນ
ປະລິນຍາລູກອ່ອນ
ມີແຮງສູ້ບໍ່ຫວັ່ນໄຫວ ແທ້ແລ້ວ !



## ມ່ວນຊື່ນ ສະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ **ຈົ່ມເຊີຍ** ການປ່ຽນແປງໃໝ່ ພະນັກງານ-ລັດຖະກອນຕ່າງກໍດີໃຈ ທີ່ຈະໄດ້ເລີ່ມປະຕິບັດຕາມລັດຖະດຳລັດໃໝ່ ສະບັບເລກທີ 4524/ກງ, ລົງວັນທີ 13 ທັນວາ 2024 ເຊິ່ງຕາມເນື້ອໃນບອກແຈ້ງ ລາຍລະອຽດງົບປະມານ ການເບີກ-ຈ່າຍອັດຕາຄ່າກິນ-ນອນພ້ອມ ມີຜົນສັກສິດໃຊ້ການເຄື່ອນໄຫວວຽກທ້ອງຖິ່ນ ອັດຕາກິນ-ອັດຕານອນ ຊິບໍ່ໄດ້ຈົກຈ່າຍເພີ້ມ ຄືກໍ່ເກົ່າຫຼັງ **ອີກແລ້ວ !**

❊ **ວັນ**ທີ 27 ມັງກອນນີ້ ໃນທີ່ສຸດກໍເຫັນຄວາມປ່ຽນແປງຂອງໂຕເລກລວມຍອດເງິນເດືອນແຈ້ງເຕືອນເຂົ້າບັນຊີ ວ່າມີຍອດເພີ່ມຂຶ້ນ ເຖິງຈະບໍ່ຫຼວງບໍ່ຫຼາຍ ແຕ່ກໍດີໃຈຕໍ່ຜົນຮັບດັ່ງກ່າວ ດີກວ່າປະປ່ອຍໃຫ້ ຄ່າແລກປ່ຽນເງິນຕາ ກັບແລກບາດເອົາໂດລາ ແລ່ນຊິງກັນຂຶ້ນ ຄາວນີ້ເງິນເດືອນເຕີ້ງ ຕົງໂຕຂັບແລ່ງ ເຖິງບໍ່ແຊງຂຶ້ນໜ້າ ເທັນວ່າຕິງຕົ່ນເຕີ້ງ ກໍທົວຍິ້ມຊື່ນຊ່ວງ **ແລ້ວບ່າ!**

## 🤗 ຊວນຍິ້ມ 🤗

*# ແອ່ນຕຸ້ງ*

### ເລື່ອງ: ຜົວດື້ມ

ທີ່ໂຮງໝໍແຫ່ງໜຶ່ງ

**ໝໍ:** ເປັນຫຍັງຄືທ່າຮ້າຍໂຕເອງປານນີ້ ເບິ່ງດຸຈົນປາງຕາຍ

**ຄົນເຈັບ:** ຜົວດື້ມ

**ໝໍ:** ຜົວດື້ມຊື່ໆ ກະຫາໃໝ່ຕອາ ບໍ່ແມ່ນວ່າໂຕບໍ່ງາມ ໂຕກະຍັງສາວຢູ່

**ຄົນເຈັບ:** ຜົວດື້ມລົງເຮືອນ ແຕ່ຂຶ້ນສອງມາ

??????



## ຄະຕິເຕືອນໃຈ

*#ດອກຫຍ້າ*

ໃຈບໍ່ໃສຕໍ່ແກ້ວ
ໃຈບໍ່ໃສຕໍ່ຄອງ
ແຍງເງົາກໍບໍ່ສ່ອງ
ຕີໄດ້ກໍບໍ່ດັງ

# ສັນຕິພາບ ແລະ ສະຖຽນລະພາບຢູ່ຕາເວັນອອກກາງ ຍັງຢູ່ຫ່າງໄກໃນປີ 2025

**# ແປ ແລະ ຮຽບຮຽງໂດຍ: ວິລະພັດ ພາບວິໄຊ**

(ຊິນຮວາ) - ໃນພາກພື້ນທີ່ຄວາມວຸ້ນວາຍກາຍເປັນເລື່ອງປົກກະຕິມາແຕ່ດົນນານ, ເຫດການຕ່າງໆທີ່ເກີດຂຶ້ນຢູ່ຕາເວັນອອກກາງໃນປີ 2024 ຍັງສືບຕໍ່ສ້າງຄວາມຕົກໃຈໄປທົ່ວໂລກເນື່ອງຈາກຄວາມຮຸນແຮງ ແລະ ຄວາມຊັບຊ້ອນ.


ເດັກນ້ອຍຊາວປາແລັດສະຕິນທີ່ອົບພະຍົບ ກຳລັງຫຼິ້ນຢູ່ບ່ອນລີ້ໄພໃນເມືອງກາຊາ, 9 ທັນວາ 2024

ການປະທະກັນລະຫວ່າງອິດສະຣາແອນ-ປາແລັດສະຕິນ ພວມກ້າວເຂົ້າສູ່ປີທີສອງ, ເຮັດໃຫ້ເຂດກາຊາຕົກຢູ່ໃນສະພາບວິກິດການດ້ານມະນຸດສະທຳຢ່າງຮ້າຍແຮງ ແລະ ສົ່ງຜົນກະທົບເປັນຄື້ນໄປທົ່ວທັງລີບັງ, ເຢເມນ ແລະ ອີຣານ; ນອກຈາກສົງຄາມຫຼາຍດ້ານຂອງອິດສະຣາແອນແລ້ວ, ການສູ້ຮົບກັນທີ່ທະວີຄວາມຮຸນແຮງຂຶ້ນໃນຊູດັງ, ຄວາມບໍ່ໝັ້ນຄົງທີ່ເພີ່ມສູງຂຶ້ນໃນລີບີ ລວມທັງການໂຄ່ນລົ້ມລັດຖະບານຂອງ ບາຊາຣ໌ ອັລ-ອັສຊາດ ໃນຊີຣີຢ່າງວ່ອງໄວ ລ້ວນສ້າງຄວາມວຸ້ນວາຍເພີ່ມຂຶ້ນອີກໃນຕາເວັນອອກກາງ.

ຄວາມໂສກເສົ້າຂອງມະນຸດ, ການປ່ຽນແປງທາງພູມີສາດການເມືອງ ແລະ ບັນດາສິ່ງທ້າທາຍທາງດ້ານເສດຖະກິດ-ສັງຄົມ ທີ່ເກີດຂຶ້ນໃນພາກພື້ນຕະຫຼອດປີ ໄດ້ບົດບັງອະນາຄົດຂອງຕາເວັນອອກກາງໃນປີ 2025.

**ການສູ້ຮົບທີ່ເພີ່ມຂຶ້ນ**

ໃນຂະນະທີ່ບັນດາຜູ້ໄກ່ເກ່ຍຍັງສືບຕໍ່ເຮັດວຽກເພື່ອເຊື່ອມຊ່ອງວ່າງລະຫວ່າງອິດສະຣາແອນ ແລະ ປາແລັດສະຕິນ ເພື່ອສ້າງຂໍ້ຕົກລົງຢຸດຍິງຢູ່ເຂດກາຊາ ຜ່ານການເຈລະຈາໂດຍທາງອ້ອມ, ອິດສະຣາແອນ ກຳລັງລົງມືໂຈມຕີທາງອາກາດ ແລະ ລະດົມຖິ້ມລະເບີດຕື່ມອີກ ໃນເຂດທີ່ບອບບາງນີ້.

ການປະທະກັນເປັນເວລາ 15 ເດືອນ ໄດ້ເຮັດໃຫ້ຊາວປາແລັດສະຕິນຫຼາຍກວ່າ 46,000 ຄົນເສຍຊີວິດ ແລະ ມີຜູ້ບາດເຈັບອີກເກືອບ 110,000 ຄົນ, ຕາມຂໍ້ມູນຂອງເຈົ້າໜ້າທີ່ສາທາລະນະສຸກເຂດກາຊາ; ສະຫະປະຊາຊາດ (ສປຊ) ຄາດຄະເນວ່າ ເມື່ອຕົ້ນເດືອນທັນວາຜ່ານມາ, ປະຊາຊົນຫຼາຍກວ່າ 1.6 ລ້ານຄົນ ອາໄສຢູ່ໃນສູນພັກເຊົາຊົ່ວຄາວ ໂດຍ 80 ເປີເຊັນຂອງເຂດກາຊາ ຢູ່ພາຍໃຕ້ຄຳສັ່ງອົບພະຍົບຢ່າງຕໍ່ເນື່ອງນັບຕັ້ງແຕ່ເດືອນຕຸລາ 2024.

ທອມ ເຟລັດເຊີ (Tom Fletcher) ຮອງເລຂາທິການໃຫຍ່ອົງການສະຫະປະຊາຊາດ, ຜູ້ຮັບຜິດຊອບວຽກງານມະນຸດສະທຳ ແລະ ຜູ້ປະສານງານການຊ່ວຍເຫຼືອສຸກເສີນ ກ່າວເມື່ອທ້າຍເດືອນທັນວາຜ່ານມາວ່າ "ບໍ່ມີບ່ອນໃດທີ່ພົນລະເຮືອນຢູ່ເຂດກາຊາປອດໄພ, ຈະມີຜູ້ເສຍຊີວິດຍ້ອນການໂຈມຕີຢູ່ເຂດກາຊາໃນປີ 2024 ຫຼາຍກວ່າທີ່ເຄີຍມີການບັນທຶກໄວ້."

ການຂັດແຍ້ງກັນຢູ່ເຂດກາຊາທີ່ຖືເປັນ "ຈຸດສູນກາງຂອງພາຍຸ" ຍັງແຜ່ລາມໄປສູ່ພາກພື້ນໃກ້ຄຽງອີກດ້ວຍ, ກໍ່ໃຫ້ເກີດຄວາມກັງວົນວ່າ ຕາເວັນອອກກາງພວມສັ່ນຄອນຢູ່ເທິງຂອບເຫວຂອງສົງຄາມໃນພາກພື້ນທີ່ກວ້າງຂຶ້ນ.

ການໂຈມຕີທາງອາກາດຂອງອິດສະຣາແອນ ໃສ່ສະຖານທູດອີຣານປະຈຳຊີຣີໃນເດືອນເມສາປີຜ່ານມາ ໄດ້ເຮັດໃຫ້ອີຣານຕອບໂຕ້ຄືນດ້ວຍການໂຈມຕີດ້ວຍເຮືອບິນຮົບໄຮ້ຄົນຂັບ (drone) ແລະ ລູກສອນໄຟຂະໜາດໃຫຍ່ ຕໍ່ອິດສະຣາແອນ, ເຮັດໃຫ້ເກີດການຕອບໂຕ້ກັນລະຫວ່າງສອງຝ່າຍຫຼາຍຂຶ້ນ. ຕໍ່ມາ, ອິດສະຣາແອນ ໄດ້ສັງຫານ ອິສມາອິວ ຮານີເຢ (Ismail Haniyeh) ຫົວໜ້າກົມການເມືອງຂອງກຸ່ມຮາມາສ (Hamas) ເມື່ອເດືອນກໍລະກົດ ແລະ ໄຊຢິດ ຮັສຊັນ ນາສຣັລເລາະ (Sayyed Hassan Nasrallah) ຜູ້ນຳຂອງກຸ່ມຮິຊບອລເລາະ (Hezbollah) ເມື່ອເດືອນກັນຍາ; ໃນເດືອນຕໍ່ມາ, ລົດຖັງຂອງອິດສະຣາແອນ ໄດ້ຂ້າມຊາຍແດນ ແລະ ບຸກເຂົ້າຍຶດດິນແດນຂອງລີບັງ.

ເຖິງວ່າຈະມີການຢຸດຍິງຊົ່ວຄາວລະຫວ່າງອິດສະຣາແອນ ແລະ ກຸ່ມຮິຊບອລເລາະ ເຊິ່ງມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 27 ພະຈິກ 2024 ແລະ ມີຈຸດປະສົງເພື່ອຢຸດຕິການປະທະກັນທີ່ມີລາຍງານວ່າມີຜູ້ເສຍຊີວິດຫຼາຍກວ່າ 4,000 ຄົນໃນລີບັງ, ກອງທັບອິດສະຣາແອນ ຍັງສືບຕໍ່ໂຈມຕີຢ່າງຕໍ່ເນື່ອງສົ່ງຜົນໃຫ້ມີຜູ້ເສຍຊີວິດຫຼາຍຂຶ້ນ.

ຫຼັງຈາກປະຕິບັດການທາງທະຫານເປັນເວລາ 12 ວັນ ໂດຍກຸ່ມປະກອບອາວຸດຊີຣີ ທີ່ສົ່ງຜົນໃຫ້ລັດຖະບານຂອງ ອັລ-ອັສຊາດ ຫຼົ້ມສະຫຼາຍໃນວັນທີ 8 ທັນວາຜ່ານມາ, ອິດສະຣາແອນ ໄດ້ບຸກໂຈມຕີທາງອາກາດຢ່າງໜັກໜ່ວງຢູ່ຊີຣີ ແລະ ເຄື່ອນກຳລັງທະຫານເຂົ້າໄປໃນເຂດປອດທະຫານໃກ້ກັບເຂດທີ່ຮາບສູງໂກລັນ (Golan Heights) ທີ່ອິດສະຣາແອນຍຶດຄອງຢູ່; ຂະນະທີ່ປີນີ້, ອິດສະຣາແອນ ໃຫ້ຄຳໝັ້ນສັນຍາວ່າ ຈະ "ໃຊ້ກຳລັງ" ຕໍ່ຕ້ານກຸ່ມຮູຕີ (Houthi) ໃນເຢເມນ ທ່າມກາງການຍິງຕອບໂຕ້ກັນທີ່ໜັກໜ່ວງຂຶ້ນລະຫວ່າງສອງຝ່າຍ.

"ປັດຈຸບັນ, ຕາເວັນອອກກາງແມ່ນສະໜາມຮົບຂອງອິດສະຣາແອນ ເຊິ່ງປະເຊີນໜ້າກັນທາງທະຫານຫຼາຍຄັ້ງ," ສະຖາບັນຄົ້ນຄວ້າ Carnegie Endowment for International Peace ທີ່ຕັ້ງຢູ່ນະຄອນຫຼວງວໍຊິງຕັນ ກ່າວເມື່ອກາງເດືອນພະຈິກ 2024 ແລະ ກ່າວຕື່ມວ່າ: ນາຍົກລັດຖະມົນຕີ ເບນຈາມິນ ເນທັນຢາຮູ (Benjamin Netanyahu) ຂອງອິດສະຣາແອນ ແລະ ພັນທະມິດຂອງເຂົາ "ເບິ່ງຄືວ່າມີຄວາມເດັດດ່ຽວທີ່ຈະຮັກສາຄວາມຂັດແຍ້ງເຫຼົ່ານີ້ໄວ້... ປະຕິເສດການເຈລະຈາ ແລະ ການແກ້ໄຂທາງການເມືອງ."

"ຫາກມີຊ່ວງເວລາໃດທີ່ຄວນໃຊ້ຄຳທີ່ມີຄວາມໝາຍສຸດຍອດ (superlative) ກ່ຽວກັບກິດຈະການໃນຕາເວັນອອກກາງ, ຊ່ວງເວລານັ້ນຄືປີ 2024... ພາກພື້ນນີ້ພວມຖືກຈັດລະບຽບຄືນໃໝ່ດ້ວຍຄວາມຮຸນແຮງອັນໃຫຍ່ຫຼວງ ແລະ ການແຂ່ງຂັນທີ່ເກີດຂຶ້ນໃໝ່" Financial Times ໄດ້ໃຫ້ຄຳເຫັນເມື່ອວັນອາທິດທີ 29 ທັນວາປີຜ່ານມາ.

**ມືທີ່ເບິ່ງບໍ່ເຫັນ**

ເຖິງແມ່ນວ່າເປັນທີ່ຍອມຮັບກັນຢ່າງກວ້າງຂວາງວ່າຄວາມວຸ້ນວາຍຢູ່ຕາເວັນອອກກາງ ຄວນໄດ້ຮັບການເຂົ້າໃຈຈາກທັດສະນະທາງປະຫວັດສາດເປັນຕົ້ນຕໍ ໂດຍພິຈາລະນາຈາກບັນຫາທີ່ບໍ່ໄດ້ຮັບການແກ້ໄຂລະຫວ່າງບັນດາຊົນເຜົ່າຕ່າງໆໃນພາກພື້ນ, ແຕ່ຜູ້ຊ່ຽວຊານຫຼາຍຄົນເຫັນດີນຳກັນວ່າອິດທິພົນພາຍນອກຈາກຝ່າຍຕາເວັນຕົກ ໂດຍສະເພາະສະຫະລັດອາເມລິກາ ກໍເປັນປັດໄຈສຳຄັນໃນສົງຄາມທຳລາຍທີ່ຍັງດຳເນີນຢູ່ໃນພາກພື້ນນີ້ເຊັ່ນກັນ.

ໃນກາງເດືອນພະຈິກ 2024 ສະພາການພົວພັນຕ່າງປະເທດ ເຊິ່ງເປັນສະຖາບັນຄົ້ນຄວ້າຂອງສະຫະລັດ ເປີດເຜີຍວ່າ "ອິດສະຣາແອນ ແມ່ນຜູ້ໄດ້ຮັບການຊ່ວຍເຫຼືອຈາກສະຫະລັດໃນຕ່າງປະເທດຫຼາຍທີ່ສຸດເປັນເວລາດົນນານ ລວມທັງການຊ່ວຍເຫຼືອດ້ານການທະຫານ," ແລະ "ສະຫະລັດ ໄດ້ຕົກລົງເປັນການຊົ່ວຄາວຜ່ານບົດບັນທຶກຄວາມເຂົ້າໃຈທີ່ຈະໃຫ້ການຊ່ວຍເຫຼືອແກ່ອິດສະຣາແອນ ໃນຈຳນວນ 3.8 ຕື້ໂດລາຕໍ່ປີ ຈົນຮອດປີ 2028."

"ການຊ່ວຍເຫຼືອທາງທະຫານຂອງສະຫະລັດຕໍ່ອິດສະຣາແອນ ໄດ້ຖີບຕົວສູງຂຶ້ນຢ່າງໄວວາເຖິງລະດັບສູງສຸດໃນຮອບຫຼາຍທົດສະວັດ ທ່າມກາງສົງຄາມທີ່ແກ່ຍາວມາເປັນເວລາ 1 ປີ ຂອງອິດສະຣາແອນ ກັບ ກຸ່ມຮາມາສ ໃນເຂດກາຊາ," ໂດຍສະຫະລັດໄດ້ອອກກົດໝາຍໃຫ້ການຊ່ວຍເຫຼືອດ້ານການທະຫານໂດຍກົງຢ່າງໜ້ອຍ 12.5 ຕື້ໂດລາ ແກ່ອິດສະຣາແອນ, ສະຖາບັນຄົ້ນຄວ້າດັ່ງກ່າວລະບຸ.

ນັກຄົ້ນຄວ້າມະຫາວິທະຍາໄລ Brown ໄດ້ຄາດຄະເນໃນຕົ້ນເດືອນຕຸລາ 2024 ລັດຖະບານຂອງປະທານາທິບໍດີ ໂຈ ໄບເດນ (Joe Biden) ຂອງສະຫະລັດ ໄດ້ໃຫ້ການຊ່ວຍເຫຼືອເພີ່ມຕື່ມແກ່ອິດສະຣາແອນ ເປັນມູນຄ່າ 17.9 ຕື້ໂດລາ ນັບຕັ້ງແຕ່ສົງຄາມກາຊາເລີ່ມຕົ້ນຂຶ້ນ.

ໃນຂະນະທີ່ສະຫະລັດເອີ້ນຕົນເອງວ່າເປັນຜູ້ໄກ່ເກ່ຍໃນການຢຸດຍິງຢູ່ເຂດກາຊາ, ແຕ່ໄດ້ໃຊ້ສິດຄັດຄ້ານຮ່າງມະຕິຂອງສະພາຄວາມໝັ້ນຄົງແຫ່ງ ສປຊ ທີ່ຮຽກຮ້ອງໃຫ້ຢຸດຍິງຢູ່ເຂດກາຊາໂດຍທັນທີ ແລະ ບໍ່ມີເງື່ອນໄຂ ຫຼາຍຄັ້ງ.


ທະຫານອິດສະຣາແອນຖືກພົບເຫັນຢູ່ໃກ້ເຂດກັນຊົນໃນເຂດທີ່ຮາບສູງໂກລັນ, 15 ທັນວາ 2024

ບົດລາຍງານຂອງ Politico ເມື່ອທ້າຍເດືອນກັນຍາ 2024 ເປີດເຜີຍວ່າ ໃນຂະນະທີ່ວໍຊິງຕັນໄດ້ຮຽກຮ້ອງຢ່າງເປີດເຜີຍໃຫ້ອິດສະຣາແອນຢຸດການໂຈມຕີຕໍ່ລີບັງ, ບັນດາບຸກຄົນສຳຄັນໃນທຳນຽບຂາວ ພັດໃຫ້ການສະໜັບສະໜູນແບບລັບໆຕໍ່ການບຸກໂຈມຕີທາງທະຫານຂອງອິດສະຣາແອນຕໍ່ກຸ່ມຮິຊບອລເລາະ.

ໃນຕົ້ນເດືອນທັນວາ 2024, ລັດຖະມົນຕີການຕ່າງປະເທດສະຫະລັດ ແອນໂທນີ ບລິງເຄນ (Antony Blinken) ໄດ້ຍອມຮັບຢ່າງເປີດເຜີຍວ່າ ຄວາມພະຍາຍາມຂອງປະເທດຕົນໃນຮອບ 20 ປີທີ່ຜ່ານມາ ເພື່ອສະແຫວງຫາການປ່ຽນແປງລະບອບການປົກຄອງໃນອີຣານ ບໍ່ໄດ້ຮັບຜົນສຳເລັດຫຼາຍປານໃດ.

ຫວ່າງບໍ່ດົນມານີ້, ທຳນຽບຫ້າແຈ (Pentagon - ກະຊວງປ້ອງກັນປະເທດສະຫະລັດ) ຍັງໄດ້ຢືນຢັນເຖິງການເພີ່ມກຳລັງທະຫານສະຫະລັດໃນຊີຣີຢ່າງເປັນທາງການເທື່ອທຳອິດ ຈາກປະມານ 900 ເປັນ 2,000 ຄົນ ໂດຍລະບຸວ່າ ການເພີ່ມກຳລັງທະຫານດັ່ງກ່າວ ມີຂຶ້ນກ່ອນການໂຄ່ນລົ້ມອຳນາດຂອງ ອັລ-ອັສຊາດ ເພື່ອຕອບສະໜອງຕໍ່ສະພາບການຄວາມໝັ້ນຄົງທີ່ມີການປ່ຽນແປງຢູ່ຊີຣີ ແລະ ປົກປ້ອງຜົນປະໂຫຍດອັນສຳຄັນຂອງອາເມລິກາໃນພາກພື້ນ.

"ສະຫະລັດ ມີບົດບາດສຳຄັນໃນຄວາມຂັດແຍ້ງເຫຼົ່ານີ້ ເນື່ອງຈາກວ່າສະຫະລັດ ເປັນຝ່າຍກະຕຸ້ນໃຫ້ເກີດຄວາມຂັດແຍ້ງ, ຢູ່ເບື້ອງຫຼັງ, ວາງແຜນ ແລະ ສະໜັບສະໜູນ ເຖິງແມ່ນວ່າສະຫະລັດຈະພະຍາຍາມປະຕິເສດການປາກົດຕົວ ແລະ ແຊກແຊງໂດຍກົງໃນການກະທຳເຫຼົ່ານີ້"

ອ່ານຕໍ່ໜ້າ 11



**ປະຊາຊົນພະຍາຍາມຮັບເອົາອາຫານບັນເທົາທຸກໃນຄ້າຍຜູ້ລີ້ໄພຈາບາລີ (Jabalia) ທາງເໜືອຂອງເຂດກາຊາ, 29 ສິງຫາ 2024**

**ສັນຕິພາບ...**
(ຕໍ່ຈາກໜ້າ 10)

ມຸທານນາ ມິຊາອັນ ອັລ-ມາຊຣູອີ (Muthanna Mishaan al-Mazrouei) ສາສະດາຈານດ້ານພູມິສາດການເມືອງຈາກມະຫາວິທະຍາໄລຕິກຣິດ (Tikrit) ຂອງອີຣັກ ກ່າວກັບຊິນຮວາ.

"ມັນເປັນເລື່ອງທີ່ໜ້າອັບອາຍແທ້ໆ... ທີ່ເຫັນພວກເຮົາປະຕິບັດຕາມຄວາມຮຽກຮ້ອງຂອງລັດຖະບານອິດສະຣາແອນ ແລະ ສືບຕໍ່ສະໜັບສະໜູນສິ່ງທີ່ລັດຖະບານອິດສະຣາແອນກຳລັງກະທຳ, ເຖິງແມ່ນພວກເຮົາຮູ້ວ່າມັນຜິດກໍຕາມ" ທ່ານ ໄມ ເຄຊີ (Mike Casey) ອະດີດເຈົ້າໜ້າທີ່ກະຊວງການຕ່າງປະເທດສະຫະລັດ ກ່າວຄຳເຫັນຕໍ່ສື່ມວນຊົນ ອັລ ຈາຊີຣາ (Al Jazeera) ເມື່ອວັນທີ 21 ທັນວາປີຜ່ານມາ.

**"ຝຸມເຟືອຍ" ທີ່ບໍ່ສາມາດບັນລຸໄດ້**

ໃນເດືອນຕຸລາ 2024, ປະມານ 1.9 ລ້ານຄົນ ໃນຈຳນວນປະຊາກອນທັງໝົດ 2.2 ລ້ານຄົນ ຕ້ອງອົບພະຍົບອອກຈາກເຂດກາຊາ; ການສຳຫຼວດເດັກນ້ອຍທີ່ອາໄສຢູ່ໃນເຂດກາຊາ ເຊິ່ງເຜີຍແຜ່ເມື່ອເດືອນທັນວາຜ່ານມາ ພົບວ່າ 96% ຂອງເດັກນ້ອຍເຫຼົ່ານີ້ ຮູ້ສຶກວ່າຕົນເອງກຳລັງຈະຕາຍ ແລະ ເກືອບເຄິ່ງໜຶ່ງ ຕ້ອງການຕາຍເນື່ອງຈາກຄວາມເຈັບປວດທີ່ພວກເຂົາກຳລັງປະສົບ.

ມີເກືອບໜຶ່ງລ້ານຄົນ ຫຼື ໜຶ່ງສ່ວນຫ້າຂອງປະຊາກອນລີບັງ ຕ້ອງອົບພະຍົບລີ້ໄພ. ໃນຊີຣີ, ມີປະຊາຊົນຫຼາຍກວ່າ 880,000 ຄົນ ຕ້ອງອົບພະຍົບອອກຈາກບ້ານເຮືອນຂອງຕົນ ຕັ້ງແຕ່ວັນທີ 27 ພະຈິກ 2024 ໂດຍປະມານ 6% ຕ້ອງອາໄສຢູ່ກັບຜູ້ພິການ; ກໍລະນີຂອງການບາດເຈັບທາງຈິດໃຈ ແມ່ນເພີ່ມຂຶ້ນໃນທົ່ວຊີຣີ ໂດຍສະເພາະໃນກຸ່ມເດັກນ້ອຍ.

ໃນເຢເມນ, ເດັກນ້ອຍ 385,000 ຄົນ ປະສົບກັບການຂາດສານອາຫານຢ່າງຮ້າຍແຮງ, ໃນຂະນະທີ່ລະບົບສາທາລະນະສຸກທີ່ລົ້ມເຫຼວ ເຮັດໃຫ້ເດັກນ້ອຍ 540,000 ຄົນ ມີຄວາມສ່ຽງຕໍ່ການເປັນພະຍາດ ເຊັ່ນໂລກອະຫິວາ; ປະຊາຊົນຫຼາຍກວ່າ 9 ລ້ານຄົນໃນລີບີ, ປາແລັດສະຕິນ ແລະ ຊູດັງ ຕ້ອງການຄວາມຊ່ວຍເຫຼືອດ້ານມະນຸດສະທຳຢ່າງຮີບດ່ວນ.

ການຂັດແຍ້ງດັ່ງກ່າວ ໄດ້ສົ່ງຜົນກະທົບທາງເສດຖະກິດຢ່າງຮ້າຍແຮງຕໍ່ພາກພື້ນ; IMF ຄາດຄະເນໃນເດືອນຕຸລາ 2024 ວ່າ ເສດຖະກິດຂອງຕາເວັນອອກກາງອາດປະເຊີນກັບການຟື້ນຕົວໃນໄລຍະຍາວ ໂດຍລວມຍອດຜະລິດຕະພັນພາຍໃນປະເທດ (GDP) ຕໍ່ຫົວຄົນ ຄາດວ່າຈະຫຼຸດລົງ 10% ເຖິງແມ່ນວ່າຈະຜ່ານໄປ 10 ປີແລ້ວ ຫຼັງຈາກການຂັດແຍ້ງຢູ່ເຂດກາຊາ.

ເນື່ອງຈາກການຂັດແຍ້ງດ້ວຍອາວຸດທີ່ເກີດຂຶ້ນເລື້ອຍໆ ແລະ ພາວະເສດຖະກິດ-ສັງຄົມທີ່ຖົດຖອຍຢູ່ຕາເວັນອອກກາງໃນປີ 2024, ປະຊາຄົມໂລກຈຶ່ງຮຽກຮ້ອງໃຫ້ມີສະຖຽນລະພາບໃນພາກພື້ນໃນປີໃໝ່ນີ້.

"ຂ້າພະເຈົ້າຫວັງວ່າ ອິດສະຣາແອນ ຈະປ່ຽນແນວທາງ ແລະ ພະຍາຍາມຊອກຫາວິທີແກ້ໄຂແບບສອງລັດຮ່ວມກັບປາແລັດສະຕິນ ເພື່ອປູທາງໄປສູ່ການສ້າງສັນຕິພາບ ແລະ ການເຮັດໃຫ້ກັບຄືນສູ່ປົກກະຕິຫຼາຍຂຶ້ນ" ນິມໂຣດ ໂກເຣນ (Nimrod Goren) ນັກວິໄຈອາວຸໂສດ້ານກິດຈະການອິດສະຣາແອນ ທີ່ສະຖາບັນຕາເວັນອອກກາງ ໃນນະຄອນຫຼວງວໍຊິງຕັນ ກ່າວກັບຊິນຮວາ.

ອົງການສະຫະປະຊາຊາດ ແລະ ປະເທດຕ່າງໆທົ່ວໂລກ ໄດ້ຮຽກຮ້ອງຊ້ຳແລ້ວຊ້ຳອີກໃຫ້ຢຸດຕິການຮຸກຮານເຂດກາຊາຂອງອິດສະຣາແອນ ແລະ ຮຽກຮ້ອງໃຫ້ມີການຢຸດຍິງທີ່ແກ່ຍາວມາເປັນເວລາດົນນານ, ສະແດງຄວາມຫວັງໃຫ້ມີການຢຸດຍິງຢ່າງຖາວອນລະຫວ່າງອິດສະຣາແອນ-ຮິຊບອລເລາະ, ສະໜັບສະໜູນການປ່ຽນຜ່ານທາງການເມືອງທີ່ນຳໂດຍຊີຣີ "ຢ່າງກວມລວມ, ເຊື່ອຖືໄດ້ ແລະ ສັນຕິພາບ" ແລະ ໃຫ້ຄຳໝັ້ນສັນຍາຈະເພີ່ມທະວີການຊ່ວຍເຫຼືອດ້ານມະນຸດສະທຳໃຫ້ແກ່ບັນດາປະເທດໃນຕາເວັນອອກກາງທີ່ໄດ້ຮັບຜົນກະທົບຈາກສົງຄາມ.

ຢ່າງໃດກໍຕາມ, ສຳລັບຜູ້ຊ່ຽວຊານຫຼາຍຄົນ, ສັນຕິພາບ ແລະ ການພັດທະນາ ຍັງຄົງເປັນສິ່ງ "ຟຸມເຟືອຍ" ທີ່ຕາເວັນອອກກາງບໍ່ສາມາດບັນລຸໄດ້ໃນປີ 2025.

"ຕາບໃດທີ່ກຸ່ມຊົນຊັ້ນສູງທາງດ້ານການເມືອງຍັງຝັງຮາກເລິກ, ການແຊກແຊງຈາກພາຍນອກ ແລະ ການແບ່ງແຍກທາງນິກາຍຍັງມີຄວາມເດັ່ນຊັດຢູ່, ຕາເວັນອອກກາງກໍຍັງຄົງເປັນພາກພື້ນທີ່ມີການຜັນແປ ແລະ ມີການປະທະກັນ ໂດຍສັນຕິພາບຍັງເປັນພຽງຄວາມຫວັງທີ່ຢູ່ຫ່າງໄກ ແລະ ບໍ່ແນ່ນອນ" ໂມຮຳເໝັດ ເອລຊິເມ (Mohamed Elchime) ສາສະດາຈານດ້ານລັດຖະສາດທີ່ມະຫາວິທະຍາໄລເຮລວັນ (Helwan) ໃນປະເທດເອຢິບ ກ່າວກັບຊິນຮວາ.

"ປັດຈຸບັນ, ຕາເວັນອອກກາງພວມປະເຊີນກັບຄວາມບໍ່ແນ່ນອນຫຼາຍຢ່າງ, ມີຄຳຖາມນັບບໍ່ຖ້ວນກ່ຽວກັບຊີຣີໃນຍຸກຂອງ ອັສຊາດ, ສົງຄາມລະຫວ່າງອີຣານ-ອິດສະຣາແອນ, ສົງຄາມເຂດກາຊາ, ການລັກຂະໂມຍທີ່ດິນຂອງອິດສະຣາແອນໃນເຂດເວສທ໌ ແບງກ໌ (West Bank), ກອງກຳລັງຕິດອາວຸດຮູຕີ ແລະ ທາດແທ້ທີ່ບໍ່ສາມາດຄາດເດົາໄດ້ຂອງລັດຖະບານສະຫະລັດຊຸດໃໝ່" ຈໍໂຈ ຄາຟີເອໂຣ (Giorgio Cafiero) CEO ຂອງ Gulf State Analytics ບໍລິສັດທີ່ປຶກສາດ້ານຄວາມສ່ຽງທາງພູມິລັດຖະສາດໃນວໍຊິງຕັນ ກ່າວເມື່ອທ້າຍເດືອນທັນວາຜ່ານມາ.

"ສະພາບການຢູ່ພາກພື້ນພວມມຸ່ງໄປສູ່ຄວາມເຄັ່ງຕຶງ, ຄວາມເສື່ອມໂຊມ ແລະ ຄວາມບໍ່ແນ່ນອນ" ອາລີ ມູຊາ (Ali Moussa) ນັກວິເຄາະການເມືອງຊາວອີຣັກ ກ່າວກັບຊິນຮວາ.

# ຫາລືເສັ້ນທາງໄປສູ່ການເລືອກຕັ້ງແຫ່ງຊາດ, ການປອງດອງ



(Xinhua) - ເມື່ອວັນອາທິດທີ 19 ມັງກອນຜ່ານມາ, ບັນດາຕົວແທນຈາກສະພາຜູ້ແທນປະຊາຊົນລີບີ ທີ່ຕັ້ງຢູ່ທາງພາກຕາເວັນອອກ ໄດ້ປຶກສາຫາລືກ່ຽວກັບການຈັດຕັ້ງລັດຖະບານເອກະພາບໃນປະເທດ ຮ່ວມກັບຄະນະຜູ້ແທນສະໜັບສະໜູນຂອງອົງການສະຫະປະຊາຊາດໃນລີບີ (UN Support Mission in Libya - UNSMIL).

ໃນການປະຊຸມກັບທ່ານ ນາງ ສະເຕຟານີ ຄູຣີ (Stephanie Koury) ຮອງຜູ້ຕາງໜ້າພິເສດຂອງເລຂາທິການໃຫຍ່ດ້ານກິດຈະການການເມືອງປະຈຳລີບີ ແລະ ຮັກສາການຫົວໜ້າ UNSMIL, ພວກເຂົາໄດ້ "ປຶກສາຫາລືກ່ຽວກັບພັດທະນາການຫຼ້າສຸດຂອງສະຖານະການທາງການເມືອງ ແລະ ເສດຖະກິດຂອງລີບີ, ແນວທາງເພື່ອຢຸດຕິວິກິດການຢູ່ລີບີ ໂດຍການຈັດການເລືອກຕັ້ງປະທານາທິບໍດີ ແລະ ລັດຖະສະພາ, ແລະ ຈັດຕັ້ງລັດຖະບານເອກະພາບ" ລັດຖະສະພາກ່າວໃນຖະແຫຼງການເທິງເວັບໄຊທາງການຂອງຕົນ; ກອງປະຊຸມຄັ້ງນີ້, ຍັງໄດ້ປຶກສາຫາລືກ່ຽວກັບກົດໝາຍຄວາມປອງດອງແຫ່ງຊາດຂອງລີບີ ທີ່ຫາກໍຮັບຮອງເອົາໃນຕົ້ນເດືອນນີ້, ຖະແຫຼງການກ່າວ.

ວັນທີ 20 ມັງກອນ, ທ່ານ ນາງ ຄູຣີ ໄດ້ພົບປະກັບທ່ານ ອາກີລາ ຊາເລ (Aguila Saleh) ປະທານສະພາຜູ້ແທນປະຊາຊົນລີບີ ເຊິ່ງທັງສອງໄດ້ເນັ້ນໜັກເຖິງຄວາມສຳຄັນຂອງຂະບວນການຮອບດ້ານທີ່ນຳໄປສູ່ການຈັດການເລືອກຕັ້ງໃນທົ່ວປະເທດ "ພວກເຮົາເນັ້ນໜັກເຖິງຄວາມສຳຄັນຂອງຂະບວນການຮອບດ້ານທີ່ນຳໄປສູ່ການເລືອກຕັ້ງແຫ່ງຊາດ ແລະ ການສ້າງຕັ້ງສະຖາບັນທີ່ເປັນເອກະພາບ, ເຂັ້ມແຂງ ແລະ ຖືກຕ້ອງຕາມກົດໝາຍລວມເຖິງລັດຖະບານດຽວທີ່ສາມາດປົກຄອງທົ່ວປະເທດ ແລະ ໃຫ້ບໍລິການແກ່ຊາວລີບີທັງໝົດ" ຄູຣີ ຂຽນເທິງເວທີສື່ສັງຄົມ X.

ທັງສອງທ່ານຍັງໄດ້ທົບທວນຄືນສະຖານະການສິດທິມະນຸດ ໂດຍເນັ້ນໜັກເຖິງຄວາມຈຳເປັນຢ່າງຍິ່ງຂອງຫຼັກນິຕິທຳ ແລະ ຄວາມຮັບຜິດຊອບ

ທ່ານ ນາງ ຄູຣີ ໄດ້ສະແດງຄວາມຂອບໃຈຕໍ່ທ່ານ ຊາເລ ທີ່ໃຫ້ຄຳໝັ້ນສັນຍາຮ່ວມມືກັບຄະນະຜູ້ແທນສະໜັບສະໜູນຂອງອົງການສະຫະປະຊາຊາດໃນລີບີ ກ່ຽວກັບ "ກົດໝາຍວ່າດ້ວຍການປອງດອງແຫ່ງຊາດທີ່ເປັນເອກະສັນກັນ ອີງໃສ່ສິດທິມະນຸດ ແລະ ຜູ້ເຄາະຮ້າຍເປັນຈຸດສູນກາງ".

ເມື່ອເດືອນທັນວາ2024 ທ່ານ ຊາເລ ປະກາດວ່າ: ທ່ານ ແລະ ທ່ານ ນາງ ຄູຣີ ໄດ້ຕົກລົງເຫັນດີກ່ຽວກັບຄວາມຈຳເປັນທີ່ຈະລວມສູນອຳນາດບໍລິຫານ ແລະ ການຈັດຕັ້ງລັດຖະບານເອກະພາບ ເພື່ອ "ກ້າວໄປຂ້າງໜ້າສູ່ການຈັດການເລືອກຕັ້ງປະທານາທິບໍດີ ແລະ ລັດຖະສະພາ ໄວເທົ່າທີ່ຈະເປັນໄປໄດ້".

ລີບີ ລົ້ມເຫຼວໃນການຈັດການເລືອກຕັ້ງທົ່ວໄປໃນເດືອນທັນວາ2021 ຕາມທີ່ໄດ້ກຳນົດໄວ້ກ່ອນໜ້ານີ້ ເນື່ອງຈາກຄວາມຂັດແຍ້ງກັນລະຫວ່າງພັກການເມືອງຕ່າງໆ ກ່ຽວກັບກົດໝາຍການເລືອກຕັ້ງ.

**ຮອງປະທານ...**
(ຕໍ່ຈາກໜ້າ 1)



ພັກເມືອງ, ຄະນະພັກຮາກຖານກຸ່ມບ້ານ, ການຈັດຕັ້ງບ້ານ, ພະນັກງານ-ລັດຖະກອນ, ພະນັກງານອາວຸໂສບຳນານ, ເຖົ້າແກ່ແນວໂຮມ, ພໍ່ແມ່ປະຊາຊົນ, ຄູ ແລະນັກຮຽນເປັນຈຳນວນຫຼາຍ.

ໃນການພົບປະຢູ່ 4 ຈຸດດັ່ງກ່າວ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ຮັບຟັງການລາຍງານກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມຂອງເມືອງແລະບ້ານ; ຈາກນັ້ນ, ບັນດາທ່ານ ສສຊ ແລະ ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ຊຸດທີ II. ບັນດາທ່ານສະມາຊິກສະພາ ຍັງໄດ້ມີການແລກປ່ຽນຄຳຄິດຄຳເຫັນຕໍ່ບັນດາບັນຫາ ແລະ ຂໍ້ສະເໜີຕ່າງໆຂອງປະຊາຊົນໃນຈຸດທີ່ຄະນະໄດ້ລົງໄປພົບປະຢູ່ 2 ເມືອງດັ່ງກ່າວ; ຫຼັງຈາກນັ້ນ, ໄດ້ຮັບຟັງຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ເຊິ່ງບັນຫາສ່ວນໃຫຍ່ແມ່ນຕິດພັນກັບຄວາມຫຍຸ້ງຍາກດ້ານພື້ນຖານໂຄງລ່າງເຊັ່ນ: ຖະໜົນຫົນທາງ, ລະບົບນຳໃຊ້-ໄຟຟ້າຢູ່ເຂດຊົນນະບົດ, ໂຮງຮຽນມີສະພາບຂາດແຄນແລະຊຸດໂຊມ, ແລະ ບັນຫາອື່ນໆຈຳນວນໜຶ່ງ.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາຜົນສຳເລັດໃນການພັດທະນາເສດຖະກິດ-ສັງຄົມຂອງເມືອງທ່າແຂກແລະເມືອງຍົມມະລາດ ໃນໄລຍະຜ່ານມາ ແລະ ຮຽກຮ້ອງໃຫ້ບັນດາເມືອງ, ບ້ານ ພ້ອມດ້ວຍປະຊາຊົນໃນເຂດດັ່ງກ່າວ ຈົ່ງມີສ່ວນຮ່ວມໃນການພັດທະນາ ເພື່ອສົ່ງເສີມ ແລະ ຂະຫຍາຍທ່າແຮງທີ່ມີຂອງເມືອງ ເພື່ອປະກອບສ່ວນເຮັດໃຫ້ແຂວງຄຳມ່ວນ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮ້ອຍ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ.

ການເຄື່ອນໄຫວຢ້ຽມຢາມຄັ້ງນີ້, ທ່ານ ຄຳໃບ ດຳລັດ ໄດ້ນຳເອົາເຄື່ອງນຸ່ງຫົ່ມ, ເຄື່ອງກິລາ, ເຄື່ອງໃຊ້ສອຍປະຈຳວັນທີ່ຈຳເປັນ ພ້ອມທັງປຶ້ມຂຽນ, ປຶ້ມແບບຮຽນ, ບິກ, ສໍດຳ ມອບໃຫ້ແຕ່ລະຈຸດ; ນອກນັ້ນ, ທ່ານຮອງປະທານ ສພຊ ຍັງໄດ້ເຂົ້າຮ່ວມພິທີເປີດ-ປິດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ແຂວງຄຳມ່ວນ ຊຸດທີ II, ກອງປະຊຸມຄົບຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 12 ປະຈຳປີ 2024 ແລະ ເຮັດວຽກກັບພະແນກສຶກສາທິການ ແລະ ກິລາແຂວງຄຳມ່ວນ ອີກດ້ວຍ.

**(ອານຸສອນ ພູມມີທອນ)**

## ເກັບໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ປ້ອງກັນການສໍ້ໂກງ ແລະ ການຮົ່ວໄຫຼຂອງຊັບສິນຂອງລັດ

ມື້ນີ້ມີຂ່າວມະຍິກມະຍ່ອຍ ຮ້ອຍມາເປັນບົດໃຫ້ທ່ານຜູ້ອ່ານເຫັນບົດຮຽນຂອງບາງປະເທດ ກ່ຽວກັບມາດຕະການຕ້ານການສໍ້ໂກງຊັບສິນຂອງລັດຂອງປະຊາຊົນ ກໍຄືບັນຫາຟຸມເຟືອຍຕ່າງໆ. ຂ່າວທຳອິດທີ່ແກະອອກມາຈາກໜັງສືພິມວຽງຈັນໃໝ່ ປະຈຳວັນທີ 16 ກໍລະກົດ 2018 ນັ້ນ ແມ່ນກ່ຽວກັບມາດຕະການປະຢັດຮັດສາຍແອວທີ່ ອາກຊັງຕິນ (ອາເຈນຕິນາ) ປະເທດແດນໄກໃນພາກພື້ນອາເມລິກາໃຕ້. ເລື່ອງມີຢູ່ວ່າ ໃນວັນທີ 10 ກໍລະກົດ 2018 ລັດຖະບານປະເທດນີ້ໄດ້ປະກາດໃຊ້ດຳລັດສະບັບໜຶ່ງກ່ຽວກັບການຕັດຫຼຸດການໃຊ້ຈ່າຍຂອງພາກລັດ ດ້ວຍການງົດການບັນຈຸສັບຊ້ອນພະນັກງານໃໝ່ໃຫ້ແກ່ສຳນັກງານອົງການຕ່າງໆຂອງພາກລັດ. ດ້ວຍວິທີດັ່ງກ່າວ, ທາງການຂອງ ອາກຊັງຕິນ ສາມາດປະຢັດເງິນໄດ້ຫຼາຍກວ່າ 860 ລ້ານໂດລາສະຫະລັດ; ໝາຍຄວາມວ່າ ຖ້າບໍ່ມີການງົດການບັນຈຸພະນັກງານ, ເງິນຈຳນວນນີ້ກໍຄືງຈະຖືກຈ່າຍເປັນເງິນເດືອນ ກໍຄືເງິນອຸດໜູນ. ການງົດການບັນຈຸສັບຊ້ອນນີ້ ແມ່ນເລີ່ມແຕ່ມື້ປະກາດໃຊ້ດຳລັດສະບັບດັ່ງກ່າວ ໄປຮອດວັນທີ 31 ທັນວາ 2019; ນອກຈາກນັ້ນ, ທາງການຍັງງົດງົບປະມານອຸດໜູນດ້ານເຕັກນິກຕ່າງໆໃຫ້ບັນດາມະຫາວິທະຍາໄລແຫ່ງຊາດ, ສູນການສຶກສາພາກເອກະຊົນ ແລະ ຂອງບັນດາແຂວງ ນັບແຕ່ວັນທີ 1 ມັງກອນ 2019 ເປັນຕົ້ນໄປ. ດຳລັດຍັງໄດ້ກຳນົດການຫ້າມໃຫ້ເງິນລາງວັນ, ລາງວັນ, ບ້ວງເງິນພິເສດແລະງົບປະມານເພີ່ມໃຫ້ແກ່ບັນດາອົງການ ແລະ ບຸກຄົນ ນັບແຕ່ມື້ປະກາດໃຊ້ດຳລັດຮອດທ້າຍປີ 2019.

ແນວໃດກໍດີ ຂ່າວໃຫ້ຮູ້ເພີ່ມຕື່ມວ່າ ດຳລັດສະບັບດັ່ງກ່າວ ໄດ້ມີຂໍ້ຍົກເວັ້ນຄື ສາມາດບັນຈຸສັບຊ້ອນພະນັກງານໃໝ່ເຂົ້າຂະແໜງການດັ່ງຕໍ່ໄປນີ້ໄດ້ຕາມປົກກະຕິຄື: ພະນັກງານສືບລາຊະການລັບຂັ້ນສູນກາງ, ຄັງເງິນ, ກົມຄຸ້ມຄອງຄ້າຍກັກຂັງສູນກາງ, ບັນດາສຳນັກງານຫ້ອງການຄົ້ນຄວ້າພັດທະນາວິທະຍາສາດເຕັກໂນໂລຊີ, ກຳລັງປະກອບອາວຸດ ແລະ ກອງກຳລັງຮັກສາຄວາມສະຫງົບ.

ເລື່ອງຕໍ່ໄປແມ່ນຂ່າວມາຈາກປະເທດກຳປູເຈຍ (ຂ່າວໜັງສືພິມເສດຖະກິດ ປະຈຳວັນທີ 8 ສິງຫາ 2014) ເປັນຂ່າວກ່ຽວກັບການປ້ອງກັນບໍ່ໃຫ້ມີການສໍ້ໂກງຊື້ຈ້າງຂໍ້ສອບເສັງ ເຊິ່ງເປັນສ່ວນໜຶ່ງຂອງມາດຕະການປ້ອງກັນການສໍ້ລາດບັງຫຼວງໃນກຸ່ມຄູ-ອາຈານ ແລະ ບັນດາກຳມະການຄວບຄຸມການສອບເສັງແຫ່ງຊາດ ສຳລັບນັກຮຽນຂັ້ນມັດທະຍົມປາຍ ເພື່ອເຂົ້າສຶກສາຕໍ່ລະດັບມະຫາວິທະຍາໄລ. ໃນການສອບເສັງປີນັ້ນ ມີກຳມະການຄວບຄຸມການສອບເສັງ (ທົ່ວປະເທດ) ທັງໝົດ 26,000 ຄົນ ບວກກັບອາສາສະໝັກອີກກວ່າ 2,000 ຄົນ; ຂໍ້ຫ້າມ ແລະ ບົດລົງໂທດມີດັ່ງນີ້: ຖ້າພົບວ່າຜູ້ໃດໃຫ້ ແລະ ຮັບສິນບົນ ຈະຖືວ່າເປັນການສໍ້ໂກງ ແລະ ຈະມີຄວາມຜິດ ເຊິ່ງໂທດສູງສຸດແມ່ນຕິດຄຸກ. ໃນປີກ່ອນໆ ການສອບເສັງຂອງນັກຮຽນຂັ້ນນີ້ມີບັນຫາການລັກກ່າຍ, ການຊື້ຈ້າງພະນັກງານຄວບຄຸມ ເຊິ່ງທາງການກຳປູເຈຍ ຖືວ່າເປັນການທຳລາຍຄຸນນະພາບການສຶກສາ.

## ຕາມພາສາ ກາຕູນ



ບັງຄັບໝູ່ກິນເຫຼົ້າ - ເບຍ ເສຍມາລະຍາດຫຼາຍ

● ໂດຍ : ພູຜາ




## ຊ້າກວ່າສອງເທື່ອ

*# ບ່າວກະບື*

**ທ້າວ**ຈອນ ຍ້າຍຈາກອັງກິດມາຢູ່ວຽງຈັນ, ເນື່ອງຈາກພົບຄວາມຫຍຸ້ງຍາກໃນການເວົ້າຈາກັບຄົນເຈົ້າຂອງປະເທດ, ເຂົາຈຶ່ງຕັດສິນໃຈຮຽນພາສາລາວ.

ເຂົາໄປຮ້ານຂາຍປຶ້ມ ແລະ ເລືອກຊື້ປຶ້ມທີ່ມີຊື່ວ່າ: "ຮຽນພາສາລາວໃນສາມສິບວັນ" ຈຳນວນສອງຫົວ. ເຈົ້າຂອງຮ້ານເວົ້າວ່າ: "ອີກຫົວໜຶ່ງຫັ້ນເຈົ້າຊື້ໃຫ້ໝູ່ເຈົ້າບໍ່?"

"ບໍ່ໆ... ຂ້ອຍຢາກຮຽນພາສາລາວໃຫ້ໄດ້ພາຍໃນຫົກສິບວັນ, ສາມສິບວັນຫັ້ນມັນສັ້ນໂພດສຳລັບຮຽນພາສາ; ດັ່ງນັ້ນ, ຂ້ອຍຈຶ່ງຊື້ສອງຫົວພາບດຽວໂລດ"

## Twice As Slow

*# BAOKBU*

John had just moved to Vientiane from England. He had trouble speaking to the local people and decided to learn Lao.

He went to a bookstore and picked up two copies of "Learn Lao in thirty days." The shopkeeper asked, "Is one of them for your friend?"

"Oh, no, no, I want to learn Lao in sixty days. Thirty days too short to learn a language. Therefore L bought two copies".

## ທ່ານ ປອ. ນາງ...

(ຕໍ່ຈາກໜ້າ 1)

ກຳມາທິການສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ພ້ອມດ້ວຍຄະນະເລຂາທິການສະພາປະຊາຊົນຂັ້ນແຂວງທີ່ໄດ້ເປັນເຈົ້າການຕັ້ງໜ້າເຄື່ອນໄຫວວຽກງານຂອງຕົນໃນປີ 2024 ແລະ ມີຜົນສຳເລັດຫຼາຍດ້ານເຊັ່ນ: ການເປັນເສນາທິການຮອບດ້ານທາງດ້ານເນື້ອໃນໃຫ້ແກ່ການດຳເນີນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມຮ່ວມກັບຄະນະລັດຖະບານ ແລະ ອົງການກ່ຽວຂ້ອງ; ເຂົ້າຮ່ວມໃນການປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ເຂົ້າຮ່ວມການກະກຽມຄວາມພ້ອມ ແລະ ດຳເນີນກອງປະຊຸມໄອປາ ຄັ້ງທີ 45 ທີ່ສະພາແຫ່ງຊາດລາວເປັນເຈົ້າພາບໃນທ້າຍເດືອນຕຸລາ 2024 ຜ່ານມາ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການຍົກສູງບົດບາດຂອງ ສປປລາວ ກໍຄືຂອງສະພາແຫ່ງຊາດລາວໃນເວທີພາກພື້ນແລະສາກົນ.

ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ເນັ້ນໜັກໃຫ້ແກ່ຜູ້ແທນກອງປະຊຸມ ຈົ່ງໄດ້ສືບຕໍ່ສົ່ງເສີມດ້ານຕັ້ງໜ້າໃນການປະຕິບັດໜ້າທີ່ຂອງຕົນ ແລະ ໃຫ້ເອົາໃຈໃສ່ບາງດ້ານທີ່ຍັງເຮັດບໍ່ທັນໄດ້ດີ ເພື່ອເຮັດໃຫ້ແຜນການທີ່ວາງໄວ້ໃນປີ 2025 ມີຜົນສຳເລັດເປັນຢ່າງດີເຊິ່ງບາງຈຸດທ່ານໄດ້ເນັ້ນ ໜັກດັ່ງນີ້:

1. ໃນຖານະເປັນອົງການເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ມີຄວາມຈຳເປັນຕ້ອງໄດ້ກຳແໜ້ນແນວທາງນະໂຍບາຍຂອງພັກວາງອອກໃນແຕ່ລະໄລຍະ, ກຳແໜ້ນບັນດາກົດໝາຍ, ນິຕິກຳ ເພື່ອສາມາດຄົ້ນຄວ້າ, ວິເຄາະວິໄຈບັນຫາຕ່າງໆ ໃຫ້ມີຄຸນນະພາບ ແລະ ປະສິດທິພາບ;

2. ເອົາໃຈໃສ່ໃນການກະກຽມເນື້ອໃນຮອບດ້ານໃຫ້ແກ່ກອງປະຊຸມສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ມີການຄົ້ນຄວ້າ, ວິເຄາະວິໄຈບັນດາບັນຫາສຳຄັນຂອງຊາດ, ການສ້າງ ແລະ ປັບປຸງກົດໝາຍ ໃຫ້ສອດຄ່ອງກັບແນວທາງແຜນນະໂຍບາຍຂອງພັກ, ຕາມລັດຖະທຳມະນູນ;

3. ເພີ່ມທະວີການປະສານສົມທົບລະຫວ່າງສະພາແຫ່ງຊາດກັບຄະນະລັດຖະບານແລະອົງການກ່ຽວຂ້ອງ, ການປະສານສົມທົບກັບຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫ້ອງວ່າການສູນກາງພັກ, ຫ້ອງວ່າການສຳນັກງານປະທານປະເທດ ເພື່ອສ້າງຄວາມເປັນເອກະພາບໃນການຊອກວິທີແກ້ໄຂບັນດາບັນຫາທີ່ສັງຄົມເລັ່ງທວງໃຫ້ມີການປັບປຸງແກ້ໄຂ;

4. ຖືສຳຄັນການປະສານສົມທົບກັບບັນດາຄະນະເລຂາທິການສະພາປະຊາຊົນຂັ້ນແຂວງຢ່າງເປັນປົກກະຕິ ເພື່ອໃຫ້ວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ມີຄວາມໂລ່ງລ່ຽນ;

5. ກະກຽມຄວາມພ້ອມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະ ພາປະຊາຊົນຂັ້ນແຂວງ ຊຸດທີ III ໃນປີ 2026;

6. ຖືສຳຄັນວຽກງານສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ພະນັກງານ-ລັດຖະກອນ ໃນສະພາບທີ່ປະເທດຊາດມີຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃຫ້ມີຄວາມອຸ່ນອຽນທຸ່ນທ່ຽງ, ມີຄຸນທາດຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດເພື່ອເຮັດສຳເລັດໜ້າທີ່ການເມືອງທີ່ຖືກມອບໝາຍໃຫ້;

7. ສືບຕໍ່ເປັນເຈົ້າການໃນການປັບປຸງກົງຈັກການຈັດຕັ້ງໃຫ້ມີຄວາມກະທັດຮັດ, ມີຄຸນນະພາບສາມາດຮອງຮັບກັບໜ້າທີ່ການເມືອງໃນໄລຍະໃໝ່.

ນອກນັ້ນ, ທ່ານຮອງປະທານສະພາແຫ່ງຊາດຍັງໄດ້ເນັ້ນໜັກບາງວຽກງານບໍລິຫານ, ພິທີການ, ການເງິນ, ວຽກງານສື່ມວນຊົນ ເຊິ່ງເປັນບັນດາໜ້າວຽກຕົ້ນຕໍຂອງຄະນະເລຂາທິການສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ